# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-31 ພຶດສະພາ 2024
ປີທີ 13
ສະບັບທີ 971
ລາຍສັປປະດາ


## ຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານຢູ່ຂັ້ນສູນກາງ



(ສພຊ) - ປະຕິບັດຕາມພາລະບົດບາດຂອງສະພາແຫ່ງຊາດໃນການຕິດຕາມກວດກາ, ໃນວັນທີ 09 ພຶດສະພາ 2024 ສະພາແຫ່ງຊາດໄດ້ຈັດກອງປະຊຸມເພື່ອຕີລາຄາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ສະບັບປັບປຸງປີ 2021 ແນໃສ່ຮັບປະກັນເຮັດໃຫ້ຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດ, ເຂັ້ມງວດ, ຄົບຖ້ວນ, ຖືກຕ້ອງຕາມຄຳຕັດສິນຂອງສານ ແລະ ຕາມກົດໝາຍທີ່ກຳນົດໄວ້.

ກອງປະຊຸມຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປະຕິບັດຄຳຕັດສິນຂອງສານຢູ່ຂັ້ນສູນກາງຄັ້ງນີ້ ໄດ້ຈັດຂຶ້ນໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານປະທານ, ຮອງປະທານກຳມາທິການຍຸຕິທຳ, ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ບັນດາທ່ານການນຳຂອງກະຊວງຍຸຕິທຳ, ຮອງລັດຖະມົນຕີ ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຮອງປະທານສານປະຊາຊົນສູງສຸດ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງ

ອ່ານຕໍ່ໜ້າ 4

## ກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍ 3 ສະບັບ ຊີ້ງເຂດສະພາແຫ່ງຊາດ

(ສພຊ) - ກອງປະຊຸມກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍ 3 ສະບັບ ຮ່າງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ແລະ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຈັດຂຶ້ນໃນວັນທີ 20-22 ພຶດສະພາ 2024 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານຄະນະປະຈຳສະພາແຫ່ງຊາດ, ມີບັນດາທ່ານປະທານ-ຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ ແລະ ບັນດາການນຳຈາກ

ອ່ານຕໍ່ໜ້າ 3

## ກຳມາທິການບັນດາເຜົ່າ ຕິດຕາມກວດກາ ແລະ ຊຸກຍູ້ວຽກງານພັດທະນາຊົນນະບົດຢູ່ແຂວງຄຳມ່ວນ



(ສພຊ) - ທ່ານ ຄຳຈັນ ໂສຕາປະເສີດ ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ປະທານກຳມາທິການບັນດາເຜົ່າ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ວຽກງານການຈັດຕັ້ງປະຕິບັດບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢູ່ແຂວງຄຳມ່ວນ ເຊິ່ງໄດ້ຈັດກອງປະຊຸມ

ອ່ານຕໍ່ໜ້າ 4

## ລົງຕິດຕາມກວດກາການເຮັດທົດລອງຂຸດຄົ້ນກິຈິຕອນ ແລະ ດຳເນີນການຊື້-ຂາຍເງິນຄຣິບໂຕ




ອ່ານຕໍ່ໜ້າ 5

## ກສຕສ ຕິດຕາມກວດກາ ແລະ ຊຸກຍູ້ການປະຕິບັດໂຄງການເຊົ່າ ແລະ ສຳປະທານທີ່ດິນຢູ່ແຂວງວຽງຈັນ

(ສພຊ)-ເພື່ອເປັນການຍົກສູງພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງ (ສພຂ), ຂອງຄະນະກຳມະການໃນການຕິດຕາມກວດກາໃຫ້ມີປະສິດທິພາບແລະປະສິດທິຜົນ, ເຂົ້າເຖິງແລະກຳໄດ້ສະພາບບັນຫາທີ່ເກີດຂຶ້ນໃນການຈັດຕັ້ງປະຕິບັດໂຄງການ; ໃນລະຫວ່າງວັນທີ 14-15 ພຶດສະພາ 2024 ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ໄດ້ລົງຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໂຄງການເຊົ່າ ແລະ ສຳປະທານທີ່ດິນຂອງບັນດາໂຄງການພັດທະນາແຮ່ທາດ ແລະ ເຂື່ອນໄຟຟ້າ ຢູ່ແຂວງວຽງຈັນ ໂດຍໄດ້ຈັດກອງປະຊຸມຮ່ວມກັບ ສພຂແລະພະແນກການທີ່ກ່ຽວຂ້ອງຂອງແຂວງ ພາຍໃຕ້ການເປັນປະທານຮ່ວມຂອງທ່ານຄຳມ່ວນ ຊົມສີຫາປັນຍາ ຮອງປະທານ ກສຕສ ແລະ ທ່ານ ລຳໄມ ກູດລາວົງ ຮອງປະທານສະພາປະຊາຊົນແຂວງ, ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານຈາກພະແນກການກ່ຽວຂ້ອງຂອງແຂວງ ກ່ຽວກັບສະພາບການເຊົ່າ ແລະ ສຳປະທານທີ່ດິນ ແລະ ການລົງທຶນດ້ານພະລັງງານ; ການຈັດຕັ້ງປະຕິບັດວຽກງານພະລັງງານ ແລະ ການຂຸດຄົ້ນແຮ່ທາດ ໂດຍສະເພາະຂຸດຄົ້ນແຮ່ທາດແບບທົດລອງແລະໂຄງການໄຟຟ້າ; ໂຄງການເຊົ່າ ແລະ ສຳປະທານຈາກໂຄງການພັດທະນາທາງດ້ານໄຟຟ້າ; ການຟື້ນຟູປ່າ ແລະ ປູກປ່າ

ອ່ານຕໍ່ໜ້າ 3

## ລະດົມແນວຄວາມຄິດໃສ່ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ



(ສພຊ) ໃນລະຫວ່າງວັນທີ 15-19 ພຶດສະພາ 2024 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ, ກຳມາທິການການຕ່າງປະເທດ ໄດ້ຈັດກອງປະຊຸມເປີດກວ້າງເພື່ອລະດົມແນວຄວາມຄິດໃສ່ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ນາງ ວັນດີ ບຸດທະສະວົງ ຮອງປະທານກຳມາທິການການຕ່າງປະເທດ; ມີບັນດາຄະນະກົມ, ຄະນະພະແນກ ແລະ ລັດຖະກອນວິຊາການທີ່ກ່ຽວຂ້ອງພາຍໃນສະພາແຫ່ງຊາດ ແລະ ກະຊວງການຕ່າງປະເທດເຂົ້າຮ່ວມ 47 ທ່ານ ຍິງ 17 ທ່ານ. ຈຸດປະສົງເພື່ອລະດົມຄວາມຄິດເຫັນໃສ່ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການພິຈາລະນາໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການໂຄສະນາເຜີຍແຜ່ຜົນສຳເລັດຂອງການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດ.

ນອກຈາກນີ້, ຍັງໄດ້ຮັບຟັງການສະຫຼຸບຕີລາຄາ, ການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນແລະກົດໝາຍ ຂອງກຳມາທິການກົດ

ອ່ານຕໍ່ໜ້າ 4



ຈັງຫວະຊີວິດ... (ໜ້າ 9)


8 ເຫດຜົນ... (ໜ້າ 10)


ລັດຖະສະພາອີຣານ... (ໜ້າ 10)

ພັດທະນາ... (ໜ້າ 12)

# ກອງປະຊຸມນະວັດຕະກຳໄອຊີທີ ຂອງ ສພຊ ແລະ ສພຂ



(ສພຊ)-ເພື່ອແລກປ່ຽນປະສົບການ, ຄວາມຮູ້ ແລະ ທັກສະໃນການນຳໃຊ້ນະວັດຕະກຳຂອງເຕັກໂນໂລຊີຂໍ້ມູນ-ຂ່າວສານ ຫຼື ໄອຊີທີ ເພື່ອສະໜັບສະໜູນຊ່ວຍເຫຼືອຕາມເປົ້າໝາຍຂອງການພັດທະນາອົງກອນຢູ່ພາຍໃນສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ຂອງ ສປປລາວ ແນໃສ່ສາມາດກຳນົດການຮ່ວມມື ແລະ ຂົງເຂດທີ່ຈະຮ່ວມມືກັນ ໃນການພັດທະນາໄອຊີທີ ລະຫວ່າງ ສພຂ ກັບ ສພຊ ແລະ ລະຫວ່າງ ສພຂ ດ້ວຍກັນ. ລະຫວ່າງວັນທີ 20-21 ພຶດສະພາ 2024 ທີ່ໂຮງແຮມລາວພລາຊາ ໄດ້ມີກອງປະຊຸມນະວັດຕະກຳໄອຊີທີ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ດາວເພັດ ສີຫາວົງ ຫົວໜ້າກົມການເງິນ, ຮອງຫົວໜ້າກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ແລະ ທ່ານ ນາງ ມາຕິນ ແທເຣີ ຜູ້ຕາງໜ້າອົງການສະຫະປະຊາຊາດເພື່ອການພັດທະນາ (UNDP); ເຂົ້າຮ່ວມມີບັນດາທ່ານຫົວໜ້າ-ຮອງຫົວໜ້າກົມ, ເລຂາທິການ-ຮອງເລຂາທິການ ສພຂ, ຊ່ຽວຊານຈາກອົງການສາກົນ ພ້ອມດ້ວຍພະນັກງານທີ່ຮັບຜິດຊອບວຽກງານສື່ມວນຊົນ ແລະ ຫ້ອງສະໝຸດ.

ທ່ານ ນາງ ດາວເພັດ ສີຫາວົງ ໄດ້ມີຄຳເຫັນກ່າວເປີດວ່າ: ກອງປະຊຸມຄັ້ງນີ້ ແມ່ນກິດຈະກຳໜຶ່ງທີ່ນອນຢູ່ໃນການສະໜັບສະໜູນດ້ານວຽກງານໄອຊີທີໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນຂອບຂອງໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ມີຈຸດປະສົງເພື່ອສ້າງຄວາມເຂົ້າໃຈໃນການນຳໃຊ້ໄອຊີທີ, ການພັດທະນາທີ່ທັນສະໄໝ ການທັນເປັນດິຈິຕອນຢູ່ພາຍໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ຮ່ວມກັນປຶກສາຫາລື ຄົ້ນຄວ້າແຜນການ ແລະ ຍຸດທະສາດການພັດທະນາວຽກງານໄອຊີທີຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ນອກນັ້ນ, ຍັງຈະໄດ້ແລກປ່ຽນບົດຮຽນທີ່ດີ, ບັນດາສິ່ງທ້າທາຍຕ່າງໆຕໍ່ກັບວຽກງານໄອຊີທີເພື່ອໃຫ້ຊ່ຽວຊານ ແລະ ຄະນະຮັບຜິດຊອບການປະເມີນ ບັນທຶກເອົາຄວາມຄິດເຫັນ ແລະ ການສະເໜີຂອງບັນດາທ່ານ ນຳໄປປະເມີນໄດ້ ແລະ ວິເຄາະເອົາຜົນຂອງການປຶກສາຫາລື ເຂົ້າໃນແຜນການຊ່ວຍເຫຼືອ ແລະ ຮ່າງແຜນຍຸດທະສາດການພັດທະນາ ແລະ ການຮ່ວມມືລະຫວ່າງສະພາແຫ່ງຊາດ ກັບ ສະພາປະຊາຊົນຂັ້ນແຂວງ. ເພື່ອຮັບປະກັນໃຫ້ວຽກໄອຊີທີ ມີຄວາມຕໍ່ເນື່ອງ ແລະ ຍືນຍົງ, ພວກເຮົາຈະໄດ້ສ້າງເຄືອຂ່າຍຜູ້ປະສານງານວຽກງານໄອຊີທີ ລະຫວ່າງສະພາແຫ່ງຊາດ ກັບ ສະພາປະຊາຊົນຂັ້ນແຂວງໃຫ້ມີການຮ່ວມມື, ແລກປ່ຽນບົດຮຽນ ແລະ ສ້າງທັກສະດ້ານໄອຊີທີຮ່ວມກັນຢ່າງປົກກະຕິ ໂດຍທັນເອົາທ່າແຮງການສະໜັບສະໜູນຂອງບັນດາຄູ່ຮ່ວມງານສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງເວົ້າລວມ, ເວົ້າສະເພາະແມ່ນຈາກອົງການສະຫະປະຊາຊາດເພື່ອການພັດທະນາ ໂດຍຜ່ານໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ເປັນຜູ້ສະໜັບສະໜູນລິເລີ່ມຂັບເຄື່ອນວຽກງານດັ່ງກ່າວ.

ກອງປະຊຸມໄດ້ຮັບຟັງການມີຄຳເຫັນຕໍ່ກອງປະຊຸມຈາກຕາງໜ້າສະພາປະຊາຊົນຂັ້ນແຂວງ; ຕາງໜ້າ UNDP ສະເໜີຈຸດປະສົງ, ເປົ້າໝາຍ ແລະ ວາລະກອງປະຊຸມ ດ້ານການພັດທະນານະວັດຕະກຳໃໝ່ໆ; ນຳສະເໜີ ແລະ ແລກປ່ຽນບົດຮຽນຕໍ່ກັບວຽກງານດ້ານໄອຊີທີພາຍໃນສະພາ ຈາກສະພາບລວມສາກົນ ແລະ ພາກພື້ນ; ນຳສະເໜີ ແລະ ແລກປ່ຽນບົດຮຽນຕໍ່ກັບການສະຫຼຸບວຽກງານຈັດຊື້ອຸປະກອນໄອທີ ຂອງ ສພຂ; ນຳສະເໜີ ແລະ ແລກ ປ່ຽນບົດຮຽນຕໍ່ກັບການມີສ່ວນຮ່ວມໃນວຽກງານນຳໃຊ້ໄອຊີທີ ລະຫວ່າງ ສພຊ ກັບ ສພຂ; ນຳສະເໜີ ແລະ ແລກ ປ່ຽນບົດຮຽນຕໍ່ກັບແບບຢ່າງຜົນງານດ້ານນະວັດຕະກຳ 1 ຫົວຂໍ້: ກ່ຽວກັບຖານຂໍ້ມູນການຄຸ້ມຄອງວຽກງານຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ; ນຳສະເໜີ ແລະ ແລກປ່ຽນບົດຮຽນຕໍ່ກັບແບບຢ່າງຜົນງານດ້ານນະວັດຕະກຳ 2 ຫົວຂໍ້: E-Office ແລະ E-Chat.

ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ຈັດແບ່ງອອກເປັນ 2 ກຸ່ມ: ກຸ່ມຄະນະເລຂາທິການ ສພຂ ແລະ ກຸ່ມພະນັກງານຂອງ ສພຂ ເຊິ່ງໄດ້ສົນທະນາຕໍ່ກັບບັນຫາເຫຼົ່ານີ້: ກະກຽມແຜນຍຸດທະສາດເພື່ອການພັດທະນາໄອຊີທີໃນລະດັບ ສພຂ, ການຊົມໃຊ້ລະບົບໄອຊີທີໃນປັດຈຸບັນຂອງ ສພຂ, ກະກຽມແຜນການມີສ່ວນຮ່ວມລະຫວ່າງ ສພຊ ກັບ ສພຂ ຕໍ່ກັບວຽກງານພັດທະນາໄອຊີທີ, ໂອກາດ ແລະ ສິ່ງທ້າທາຍຂອງວຽກງານໄອຊີທີໃນປັດຈຸບັນ, ນະວັດຕະກຳທີ່ມີຄວາມສົນໃຈ ແລະ ສິ່ງທີ່ເປັນໄປໄດ້ໃນການນຳໃຊ້ກັບ ສພຂ ໃນປັດຈຸບັນ, ທາງເລືອກຂອງ ສພຂ ສຳລັບຍຸດທະສາດດ້ານໄອຊີທີ ແລະ ການປະສານສົມທົບລະຫວ່າງ ສພຂ ກັບ ສພຊ ພ້ອມທັງໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນນຳສະເໜີ.

ນອກຈາກນີ້, ຍັງໄດ້ຮັບຟັງການນຳສະເໜີ ແລະ ແລກປ່ຽນບົດຮຽນຕໍ່ກັບແບບຢ່າງຜົນງານດ້ານນະວັດຕະກຳ 3 ຫົວຂໍ້: ພາບລວມວຽກງານຈັດຕັ້ງປະຕິບັດດ້ານນະວັດຕະກຳ, ບົດຮຽນ ແລະ ສິ່ງທ້າທາຍ; ນຳສະເໜີ ແລະ ແລກປ່ຽນບົດຮຽນຕໍ່ກັບແບບຢ່າງຜົນງານດ້ານນະວັດຕະກຳ 4 ຫົວຂໍ້: ແຫຼ່ງເກັບກຳບັນດາຂໍ້ມູນດິຈິຕອນ-ລະບົບ ຈັດການຂໍ້ມູນດິຈິຕອນ (DSpace); ສົນທະນາກ່ຽວກັບບຸລິມະສິດວຽກງານຄົ້ນຄວ້ານະວັດຕະກຳໃໝ່ໆ ປະຈຳປີ 2024 ແລະ 2025 ເຊັ່ນ: ຄວາມຕ້ອງການບຸລິມະສິດຕໍ່ກັບນະວັດຕະກຳໃໝ່ໆເພື່ອຮັບໃຊ້ໃຫ້ແກ່ສພຂ, ໃນອະນາຄົດຈະມີການຜັນຂະຫຍາຍແນວໃດໃນວຽກງານແລກປ່ຽນ ແລະ ແບ່ງປັນບົດຮຽນ ລວມທັງການສ້າງຄວາມເຂັ້ມແຂງວຽກງານສື່ສານພາຍໃນ (ຍົກຕົວຢ່າງ: ການນຳໃຊ້ກຸ່ມສົນທະນາໃນວັອດແອັບ) ແລະ ບາດກ້າວຕໍ່ໜ້າໃນການສ້າງການມີສ່ວນຮ່ວມໃນວຽກງານທັນເປັນທັນສະໄໝ ແລະ ການພັດທະນາດ້ານໄອທີລະຫວ່າງສພຂ ກັບ ສພຊ.

**(ສອນສັກ ວັນວິໄຊ)**







*# ຄັດໂດຍ: ທອມສະນິດ*

*❒ ເປີດຂະບວນການສັກວັກຊີນກັນພະຍາດໝາກແດງໃຫຍ່-ໝາກແດງນ້ອຍແຫ່ງຊາດທົ່ວປະເທດ ໃນວັນທີ 17 ພຶດສະພາຜ່ານມາ, ເຊິ່ງການເປີດຂະບວນສັກວັກຊີນໃນຄັ້ງນີ້ແມ່ນແນໃສ່ເດັກນ້ອຍທີ່ມີອາຍຸ 09-59 ເດືອນ ຫຼື ຕໍ່າກວ່າ 5 ປີ ແລະ ຈະໃຫ້ການປ້ອງກັນແກ່ເດັກນ້ອຍຈຳນວນຫຼາຍກວ່າເຄິ່ງລ້ານຄົນຈາກພະຍາດທັງສອງຊະນິດ ເຊິ່ງຂະບວນການສັກວັກຊີນກັນພະຍາດດັ່ງກ່າວ ນຳພາໂດຍກະຊວງສາທາລະນະສຸກ ແຫ່ງ ສປປ ລາວ ຮ່ວມກັບອົງການກາວີ (Gavi), ລັດຖະບານອົດສະຕຣາລີ, ອົງການອຸຍນີເຊັບ ແລະ ອົງການອະນາໄມໂລກ ເພື່ອຊ່ວຍສະກັດກັ້ນການແຜ່ລະບາດຂອງພະຍາດໝາກແດງໃຫຍ່ ແລະ ໝາກແດງນ້ອຍ ເຊິ່ງໃນປັດຈຸບັນເຫັນໄດ້ວ່າມີການເພີ່ມຂຶ້ນກໍລະນີຂອງພະຍາດທັງສອງຊະນິດໃນທົ່ວໂລກ.*

***ໜສພ. ປະຊາຊົນ 20/05/2024***

*❒ ໄລຍະລະດູຮ້ອນປີ 2024, ອາກາດຮ້ອນອົບເອົ້າຫຼາຍ ບາງມື້ອຸນຫະພູມສູງເຖິງ 40 ກວ່າອົງສາ ເຮັດໃຫ້ຄົວເຮືອນຕ່າງໆຊົມໃຊ້ໄຟຟ້າເກີນຂອບເຂດ ປະກອບກັບການເພີ່ມຂຶ້ນຂອງລົດໄຟຟ້າ ເຮັດໃຫ້ການຊົມໃຊ້ໄຟຟ້າເພີ່ມຂຶ້ນ 53% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສະນັ້ນ, ສິ່ງຜົນໃຫ້ເກີດບັນຫາໄຟຟ້າບໍ່ພຽງພໍ, ໄຟດັບ ແລະ ໝໍ້ແປງມີບັນຫາ. ພ້ອມນັ້ນ, ຍັງຝາກເຖິງພໍ່ແມ່ປະຊາຊົນໃນຂອບເຂດທົ່ວປະເທດ ຈົ່ງຊ່ວຍກັນປະຢັດພະລັງງານໄຟຟ້າ ເປັນຕົ້ນຫຼີກລ່ຽງການໃຊ້ໝໍ້ແດງ, ຕົ້ມນໍ້າຮ້ອນຝຶດແລ້ວຄວນຖອດປັກທັນທີ, ຄວນປິດຕູ້ເຢັນເວລາໃຊ້ງານແລ້ວ, ເປີດແອໜ່ວຍດຽວໃນເວລາ 18-20 ໂມງ ແລ້ວເອີ້ນສະມາຊິກຄອບຄົວມາຢູ່ນຳກັນ ຫຼີກລ່ຽງເປີດແອຫ້ອງໃຜຫ້ອງລາວ. ປັດຈຸບັນ, ເປັນໄລຍະລະດູຮ້ອນ ກ້າວເຂົ້າສູ່ລະດູຝົນ ແຈ້ງເຕືອນໃຫ້ຜູ້ຊົມໃຊ້ໄຟຟ້ານຳໃຊ້ໄຟຟ້າຢ່າງລະມັດລະວັງ ແລະ ມີສະຕິ ຫາກພົບເຫັນອຸບັດເຫດທີ່ເກີດຈາກໄຟຟ້າ ສາມາດແຈ້ງສາຍດ່ວນ 1199 ຕະຫຼອດ 24 ຊົ່ວໂມງ.*

***ໜສພ. ປະເທດລາວ 20/05/2024***

*❒ ການສູບຢາ ແລະ ການໄດ້ຮັບຄວັນຢາສູບເປັນສາເຫດຂອງການເຈັບປ່ວຍຮ້າຍແຮງ, ການພິການ ແລະ ການຕາຍກ່ອນໄວອັນຄວນ, ຜູ້ເປັນພະຍາດທີ່ເກີດຈາກຢາສູບ ລ້ວນແຕ່ມີຄ່າໃຊ້ຈ່າຍສູງຫຼາຍ ຈາກການຄິດໄລ່ຄ່າໃຊ້ຈ່າຍທັງ ທາງກົງ ແລະ ທາງອ້ອມ ໃນການປິ່ນປົວພະຍາດທີ່ເກີດຈາກການສູບຢາໃນລະດັບຊາດ ແຕ່ລະປີສູງເຖິງ 3,6 ພັນຕື້ກີບ ຫຼື ປະມານ 2,3% ຂອງ GDP, ຢາສູບເຮັດໃຫ້ຄົນລາວເສຍຊີວິດ 6.700 ຄົນຕໍ່ປີ ຫຼື 18 ຄົນຕໍ່ມື້ ເຊິ່ງກວມເອົາ 15% ຂອງການຕາຍທັງໝົດໃນ ສປປ ລາວ.*

***ໜສພ. ປະຊາຊົນ 21/05/2024***

ສຽງຂອງສະພາແຫ່ງຊາດ
ຜູ້ແທນປະຊາຊົນ
PHOUTHEN PASAXON



# ສຳເລັດກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານກົມສື່ມວນຊົນ




(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານກົມສື່ມວນຊົນ ໄດ້ຈັດຂຶ້ນໃນຕອນເຊົ້າວັນຈັນທີ 20 ພຶດສະພາ 2024 ທີ່ສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຮ່ວມຂອງສະຫາຍ ປອ. ພຶດສະໄໝ ບຸນວິໄລ ເລຂາໜ່ວຍພັກກົມສື່ມວນຊົນ, ສະຫາຍ ພອນແກ້ວ ຕົ້ນວໍລະຈິດ ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ສະຫາຍ ນາງ ໄຊໂສພາພອນ ມິ່ງມຸງຄຸນ ເລຂາໜ່ວຍຊາວໜຸ່ມຮາກຖານກົມສື່ມວນຊົນ; ມີບັນດາສະຫາຍຕາງໜ້າໜ່ວຍຊາວໜຸ່ມຮາກຖານພາຍໃນ ສພຊ ພ້ອມດ້ວຍສະມາຊິກຊາວໜຸ່ມພາຍໃນໜ່ວຍຮາກຖານດັ່ງກ່າວເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານບົດສຳຫຼວດການນຳພາ ແລະ ພ້ອມກັນສະຫຼຸບຕີລາຄາ, ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງຂອງໜ່ວຍຊາວໜຸ່ມຮາກຖານກົມສື່ມວນຊົນ ເຊິ່ງໄດ້ຖືເອົາວຽກງານສຶກສາອົບຮົມການເມືອງ-ແນວຄິດ ເປັນວຽກງານໜຶ່ງທີ່ສຳຄັນ ໂດຍໄດ້ນຳພາຈັດຕັ້ງເຜີຍແຜ່ເຊື່ອມຊຶມ, ຊຸກຍູ້ສະມາຊິກຊາວໜຸ່ມ ເຂົ້າຮ່ວມຮັບຟັງການເຜີຍແຜ່ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ, ລະບຽບກົດໝາຍຂອງລັດ ແລະ ວັນສຳຄັນຕ່າງໆຂອງພັກ-ຂອງຊາດ ໃນແຕ່ລະໄລຍະຢ່າງປົກກະຕິ; ເອົາໃຈໃສ່ຢ່າງຕັ້ງໜ້າໃນການກໍ່ສ້າງສະມາຊິກຊາວໜຸ່ມທາງດ້ານການເມືອງ-ແນວຄິດ ແລະ ການຈັດຕັ້ງ, ປັບປຸງແບບແຜນວິທີເຮັດວຽກຕິດພັນກັບວຽກງານຕົວຈິງ, ຮ່ວມຊີວິດການເມືອງເປັນປະຈຳ ແລະ ເຂົ້າຮ່ວມວຽກງານຂະບວນການເພື່ອຂໍ່ານັບຮັບຕ້ອນສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງພັກ-ຂອງຊາດ ແລະ ວຽກງານອື່ນໆຢ່າງມີຜົນສຳເລັດ.

ສະມາຊິກຊາວໜຸ່ມກົມສື່ມວນຊົນ ໄດ້ໃຊ້ສິດປະຊາທິປະໄຕຂອງຕົນປ່ອນບັດເລືອກຕັ້ງເອົາຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ ເຊິ່ງມີຜູ້ສະໝັກ 5 ສະຫາຍ ຍິງ 3 ສະຫາຍ, ເລືອກໄດ້ 3 ສະຫາຍ ຍິງ 2 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກໄດ້ເຫັນດີເລືອກເອົາສະຫາຍ ນາງ ນິດຕາ ຄຸນປາກດີ ເປັນເລຂາ, ສະຫາຍ ອານຸສອນ ພູມມີທອນ ເປັນຮອງເລຂາ ທັງເປັນປະທານກວດກາ ແລະ ສະຫາຍ ນາງ ອາລິນ ສຸພົມມະປະດິດ ເປັນກຳມະການ.

ໃນໂອກາດນີ້, ສະຫາຍ ປອ. ພຶດສະໄໝ ບຸນວິໄລ ໄດ້ມີຄຳເຫັນໂອ້ລົມຕໍ່ທີ່ປະຊຸມ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍຜົນງານທີ່ຄະນະໜ່ວຍຊາວໜຸ່ມຮາກຖານກົມສື່ມວນຊົນ ແລະ ສະມາຊິກຊາວໜຸ່ມພາຍໃນໜ່ວຍທີ່ຍາດມາໄດ້ໃນໄລຍະຜ່ານມາ. ພ້ອມດຽວກັນນັ້ນ, ກໍໄດ້ເນັ້ນໜັກໃຫ້ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ ຕັ້ງໜ້າສຶກສາອົບຮົມສະມາຊິກຊາວໜຸ່ມໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ມີຄຸນສົມບັດສິນທຳປະຕິວັດ, ຮັກຊາດ ຮັກລະບອບປະຊາທິປະໄຕ, ເປັນແບບຢ່າງໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ແລະ ການດຳລົງຊີວິດ; ສືບຕໍ່ປັບປຸງກົງຈັກ ແລະ ສະມາຊິກຊາວໜຸ່ມ ໃຫ້ເຂັ້ມແຂງຮອບດ້ານ ແລະ ປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ; ສືບຕໍ່ຮັກສາມູນເຊື້ອຄວາມສາມັກຄີ, ມີທັດສະນະມະຫາຊົນ, ມີຄວາມດຸໝັ່ນອົດທົນ, ຄົ້ນຄວ້າສຶກສາຮ່ຳຮຽນ ຍົກລະດັບຄວາມຮູ້-ຄວາມສາມາດ ໃນການປະຕິບັດວຽກງານໃຫ້ສູງຂຶ້ນເລື້ອຍໆ; ສ້າງ ແລະ ເຂົ້າຮ່ວມຂະບວນການເຄື່ອນໄຫວວຽກງານຊາວໜຸ່ມໃຫ້ຫຼາຍ, ມີບັນຍາກາດຟົດຟື້ນ, ຫ້າວຫັນ ໂດຍມີເນື້ອໃນຕິດພັນກັບການສຶກສາອົບຮົມໄປພ້ອມໆກັນ; ຍົກສູງສະຕິໃນການບໍລິໂພກຂ່າວສານ ໂດຍມີການກັ່ນຕອງເລືອກເຟັ້ນເອົາສິ່ງທີ່ດີ, ຖືກຕ້ອງ ແລະ ສາມາດໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຢ່າງມີປະສິດທິຜົນ.

**(ສອນສັກ ວັນວິໄຊ)**





## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ກະຊວງ, ອົງການຈັດຕັ້ງພັກ-ລັດຂັ້ນສູນກາງ ພ້ອມທັງແຂກຖືກເຊີນ ເຂົ້າຮ່ວມເປັນຈຳນວນຫຼາຍ. ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອລະດົມສະຕິປັນຍາຈາກບັນດາທ່ານຜູ້ແທນ, ຄະນະຮັບຜິດຊອບການສ້າງ ແລະ ປັບປຸງກົດໝາຍ ກ່ອນນຳສະເໜີຮ່າງກົດໝາຍດັ່ງກ່າວໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດພິຈາລະນາ ເພື່ອນຳເຂົ້າກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ພິຈາລະນາ, ຮັບຮອງເອົາ.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ຕີລາຄາວ່າ: ໃນໄລຍະຜ່ານມາຄະນະຮັບຜິດຊອບປັບປຸງຮ່າງກົດໝາຍທັງ 3 ສະບັບ ໄດ້ເອົາໃຈໃສ່ຄົ້ນຄວ້າ ຮັບຟັງ ແລະ ໄດ້ນຳເອົາຮ່າງກົດໝາຍລົງໄປປະເມີນຜົນການຈັດຕັ້ງປະຕິບັດຢູ່ໃນຂອບເຂດທົ່ວປະເທດ ແລະ ຕໍ່ມາ ໄດ້ນຳໄປທາບທາມຄຳເຫັນໃນຂອບເຂດທົ່ວປະເທດ ເຊິ່ງຄັ້ງຫຼ້າສຸດແມ່ນໄດ້ຈັດກອງປະຊຸມທາບທາມຄຳເຫັນຢູ່ຂັ້ນສູນກາງ. ຄະນະຮັບຜິດຊອບປັບປຸງແຕ່ລະກົດໝາຍ ໄດ້ສືບຕໍ່ຄົ້ນຄວ້າ, ປັບປຸງ ແລະ ສັງລວມເອົາບັນດາຄຳເຫັນຂອງຜູ້ແທນກອງປະຊຸມ ເພື່ອພ້ອມກັນກວດກາເນື້ອໃນຮອບດ້ານເປັນຄັ້ງສຸດທ້າຍ ກ່ອນທີ່ຈະລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ນຳເຂົ້າໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX.

ໃນກອງປະຊຸມ ຜູ້ແທນເຂົ້າຮ່ວມໄດ້ຮັບຟັງບົດລາຍງານຈາກຄະນະຮັບຜິດຊອບປັບປຸງກົດໝາຍ ກ່ຽວກັບການປັບປຸງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງຕາມລຳດັບ. ຈາກນັ້ນ, ບັນດາຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນເຊີດຊູຄວາມຮັບຜິດຊອບ, ສຸມສະຕິປັນຍາ ຄົ້ນຄວ້າປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຂອງ 3 ຮ່າງກົດໝາຍຢ່າງມີຈຸດສຸມແລະເປັນຂະບວນຟົດຟື້ນ, ກົງໄປກົງມາ ເພື່ອເຮັດໃຫ້ກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ດ້ວຍຄຸນນະພາບສູງ.

**(ນາງ ກົງໃຈ ແສງອຳພົນ)**




## ກສຕສ...

(ຕໍ່ຈາກໜ້າ 1)

ທົດແທນຄືນພື້ນທີ່ປ່າໄມ້ທຳມະຊາດ ຈາກໂຄງການພັດທະນາຂຸດຄົ້ນບໍ່ແຮ່, ໂຄງການພັດທະນາໄຟຟ້າ ແລະ ໂຄງການອື່ນໆ; ການເກັບລາຍຮັບຈາກໂຄງການເຊົ່າ ແລະ ສຳປະທານທີ່ດິນຈາກໂຄງການພັດທະນາບໍ່ແຮ່ ໂດຍສະເພາະລາຍຮັບຈາກການທົດລອງຂຸດຄົ້ນແຮ່ທາດ ແລະ ໂຄງການພັດທະນາເຂື່ອນໄຟຟ້າ; ການຈັດຕັ້ງປະຕິບັດການປຸງແຕ່ງແຮ່ທາດ ແລະ ການສົ່ງອອກສິນຄ້າປະເພດແຮ່ທາດ.

ທັງນີ້, ກໍເພື່ອເກັບກຳຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ, ຜົນກະທົບຕໍ່ປະຊາຊົນແລະສິ່ງແວດລ້ອມທຳມະຊາດ-ສັງຄົມ ທີ່ອາດຈະເກີດຂຶ້ນຈາກການພັດທະນາໂຄງການ ເພື່ອຮັບປະກັນໃຫ້ແຕ່ລະໂຄງການດຳເນີນໄປດ້ວຍຄວາມຖືກຕ້ອງຕາມຂັ້ນຕອນ, ຫຼັກການບົນພື້ນຖານລະບຽບກົດໝາຍ, ຮັກສາສິດຜົນປະໂຫຍດຂອງພາກລັດ, ໂຄງການ ແລະ ປະຊາຊົນ ໃຫ້ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້ໃນແຕ່ລະໄລຍະຂອງການພັດທະນາໂຄງການ ແນໃສ່ເຮັດໃຫ້ທົ່ວສັງຄົມມີສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ສູງຂຶ້ນ ເຮັດໃຫ້ການຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ມີຄວາມເຂັ້ມງວດ ແລະ ສັກສິດກວ່າເກົ່າ.

ໂອກາດນີ້, ທ່ານຄຳມ່ວນ ຊົມສີຫາປັນຍາ ແລະ ທ່ານ ລຳໄມ ກູດລາວົງ ພ້ອມດ້ວຍຄະນະຍັງໄດ້ລົງຢ້ຽມຢາມພື້ນທີ່ໂຄງການຕ່າງໆຄື: ໂຄງການຂຸດຄົ້ນແຮ່ຖ່ານຫີນ ຢູ່ເຂດບ້ານບໍ່ຈານ ເມືອງຫີນເຫີບ ຂອງບໍລິສັດ ພັດທະນາກະສິກຳ ອຸດສາຫະກຳ ສຳຫຼວດແຮ່ຖ່ານຫີນ, ໂຄງການຂຸດຄົ້ນແຮ່ເຫຼັກແບບທົດລອງຢູ່ເຂດບ້ານຊວງ ເມືອງວັງວຽງ ຂອງບໍລິສັດ ເຟີສແປຊີຟິກ ມາຍນິງ ຈຳກັດ ແລະ ໂຄງການຂຸດຄົ້ນແຮ່ຄຳຕົກຂ້ອນ 2 ໂຄງການ ຢູ່ເມືອງແມດຂອງບໍລິສັດຄູນຊັບປະເສີດ ສຳຫຼວດຂຸດຄົ້ນຄຳບໍ່ແຮ່ ຈຳກັດ ແລະ ບໍລິສັດ ແຮ່ທາດລາວ ຈຳກັດ.



## ຕິດຕາມ...

(ຕໍ່ຈາກໜ້າ 1)

ສຸດ, ຮອງປະທານອົງການກວດກາແຫ່ງລັດ, ຫົວໜ້າອົງການໄອຍະການປະຊາຊົນພາກກາງ, ຮອງປະທານສານທະຫານຂັ້ນສູງ, ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຮອງປະທານສານປະຊາຊົນພາກກາງ; ບັນດາທ່ານຫົວໜ້າ ແລະ ຮອງຫົວໜ້າກົມ, ຜູ້ຕາງໜ້າຈາກກະຊວງ ແລະ ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຈຳນວນຫຼາຍ.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນກ່າວເປີດ ໂດຍໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມ ແມ່ນເພື່ອປຶກສາຫາລື, ແລກປ່ຽນຄວາມເຫັນກ່ຽວກັບວຽກງານການຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃນໄລຍະຜ່ານມາ ເພື່ອຊອກໃຫ້ເຫັນໄດ້ເຖິງຂໍ້ສະດວກ ແລະ ດ້ານດີ ທີ່ຄວນເສີມຂະຫຍາຍ, ຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງ ທີ່ຄວນໄດ້ເອົາໃຈໃສ່ປັບປຸງແກ້ໄຂ, ສາເຫດທີ່ພາໃຫ້ການຕັດສິນຄະດີຈຳນວນໜຶ່ງແກ່ຍາວ, ບໍ່ສາມາດຈັດຕັ້ງປະຕິບັດໄດ້, ສິ່ງທ້າທາຍຕ່າງໆ ແລະ ບາງບົດຮຽນທີ່ຖອດຖອນໄດ້ ແນໃສ່ສ້າງຄວາມເປັນເອກະພາບສູງໃນການຈັດຕັ້ງປະຕິບັດ, ເພື່ອເຮັດໃຫ້ທົ່ວສັງຄົມມີສະຕິເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃຫ້ສູງຂຶ້ນ, ມີປະສິດທິພາບ ແລະ ປະສິດທິຜົນ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງຜູ້ຕາງໜ້າກະຊວງຍຸຕິທຳ ກ່ຽວກັບການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ສະບັບປັບປຸງປີ 2021 ແລະ ສະພາບການຈັດຕັ້ງປະຕິບັດວຽກງານປະຕິບັດຄຳຕັດສິນຂອງສານແຕ່ລະຂັ້ນ; ການລາຍງານຂອງຜູ້ຕາງໜ້າຈາກກະຊວງປ້ອງການຄວາມສະຫງົບ ແລະ ກະຊວງການເງິນ ກ່ຽວກັບສະພາບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ການປະຕິບັດດຳລັດຂອງລັດຖະບານ ວ່າດ້ວຍຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ສະບັບເລກທີ 280/ນຍ, ລົງວັນທີ 09/8/2022 ໃນໄລຍະຜ່ານມາ; ບັນດາທ່ານຜູ້ຕາງໜ້າຈາກສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ ແລະ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນປະກອບຄຳຄິດເຫັນຢ່າງຫຼາກຫຼາຍ ເຊິ່ງເປັນຂໍ້ມູນເພີ່ມຕື່ມທີ່ສຳຄັນໃຫ້ແກ່ການດຳເນີນການປະຕິບັດຄຳຕັດສິນຂອງສານໃຫ້ມີປະສິດທິຜົນດີຂຶ້ນເລື້ອຍໆ.

**(ຂ່າວ: ນາງ ກຸກກິກ ບຸດດາໄຊ; ພາບ: ສອນສັກ ວັນວິໄຊ)**



## ລະດົມ...

(ຕໍ່ຈາກໜ້າ 1)

ໝາຍໃນໄລຍະຜ່ານມາ ທີ່ສະເໜີໂດຍຫົວໜ້າກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ; ການຈັດຕັ້ງປະຕິບັດກົດໝາຍຂົງເຂດການຕ່າງປະເທດ ແລະ ຄວາມຄືບໜ້າການຜັນຂະຫຍາຍບາງມາດຕາຂອງກົດໝາຍໃນຂົງເຂດການຕ່າງປະເທດ ເຊິ່ງສະເໜີໂດຍທ່ານຮອງຫົວໜ້າກົມສົນທິສັນຍາ ແລະ ກົດໝາຍຂອງກະຊວງການຕ່າງປະເທດ.

ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາ ແລະ ປະກອບຄຳຄິດຄຳເຫັນຕໍ່ຮ່າງມະຕິສອງສະບັບດັ່ງກ່າວ ຢ່າງມີຈຸດສຸມ, ກົງໄປກົງມາ ແລະ ເປັນຂະບວນຟົດຟື້ນ ເພື່ອເຮັດໃຫ້ເນື້ອໃນມີຄວາມຄົບຖ້ວນສົມບູນ, ສອດຄ່ອງກັບລະບຽບກົດໝາຍ ແລະ ສະພາບຄວາມເປັນຈິງ, ແລະ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີປະສິດຕິພາບແລະປະສິດຕິຜົນສູງ.

ໃນຕອນທ້າຍ, ທ່ານຮອງປະທານກຳມາທິການການຕ່າງປະເທດ ໄດ້ຕີລາຄາສູງຕໍ່ບັນດາຄຳຄິດຄຳເຫັນ ແລະ ຂໍ້ສະເໜີແນະຕ່າງໆ ເພື່ອເຮັດໃຫ້ການຄົ້ນຄວ້າ, ພິຈາລະນາໃຫ້ສັດຕະຍາບັນແກ່ສົນທິສັນຍາແລະສັນຍາສາກົນ ມີຄວາມເປັນເອກະພາບກັນ, ຖືກຕ້ອງ, ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຕ່າງໆຂອງ ສປປ ລາວ; ພ້ອມທັງສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາທ່ານວິທະຍາກອນ ທີ່ໄດ້ຂຶ້ນສະເໜີບັນດາບົດຕ່າງໆທີ່ເປັນຄວາມຮູ້ອັນດີໃຫ້ແກ່ບັນດາຜູ້ເຂົ້າຮ່ວມກອງປະຊຸມ ເຂົ້າໃຈແຈ້ງຂຶ້ນກວ່າເກົ່າ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ມີປະສິດຕິຜົນສູງ .

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.



## ກຳມາທິການ...

(ຕໍ່ຈາກໜ້າ 1)

ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຂອງແຂວງ ໃນຕອນເຊົ້າຂອງວັນພຸດທີ 15 ພຶດສະພາ 2024 ທີ່ສຳນັກງານສະພາປະຊາຊົນແຂວງ (ສພຂ); ເຂົ້າຮ່ວມມີທ່ານ ນາງ ບົງອອນ ໄຊຍະສິດ ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12, ບັນດາທ່ານ ຄປຈສພຂ, ຫົວໜ້າ-ຮອງຫົວໜ້າພະແນກການ ແລະ ອົງການຈັດຕັ້ງຂັ້ນແຂວງ, ຄະນະກອງບັນຊາການ ປກຊ-ປກສ ພ້ອມດ້ວຍແຂກຖືກເຊີນ.

ກອງປະຊຸມໄດ້ຮັບຟັງການລາຍງານຕາມຄຳຖາມເຈາະຈີ້ມຂອງກຳມາທິການບັນດາເຜົ່າ ເປັນຕົ້ນ: ການຈັດຕັ້ງປະຕິບັດ 9 ຄາດໝາຍ ຕາມມະຕິ 82/ສພຊ, ລົງວັນທີ 30 ທັນວາ 2022 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023; ການປະເມີນມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ຕາມດຳລັດ 348/ລບ, ລົງວັນທີ 16 ພະຈິກ 2017 ເພື່ອຈັດຕັ້ງປະຕິບັດບັນດາຄາດໝາຍຂອງແຜນປີ 2024 ໃຫ້ສຳເລັດ; ການແກ້ໄຂປາກົດການຫຍໍ້ທໍ້ທາງສາສະໜາ ແລະ ບັນດາເຜົ່າຢູ່ພາຍໃນແຂວງ. ຈາກນັ້ນ, ທ່ານ ຄຳຈັນ ໂສດາປະເສີດ ໃນນາມປະທານກອງປະຊຸມ ໄດ້ມີຄຳຊັກຖາມເຈາະຈີ້ມບາງບັນຫາໃນການຈັດຕັ້ງປະຕິບັດວຽກງານ; ບັນດາຜູ້ເຂົ້າຮ່ວມກໍໄດ້ພ້ອມກັນແລກປ່ຽນ ຄຳຄິດຄຳເຫັນ ແລະ ຕອບຂໍ້ຊັກຖາມຢ່າງກົງໄປກົງມາ ໃນການຈັດຕັ້ງປະຕິບັດວຽກງານຕົວຈິງໃນໄລຍະຜ່ານມາ ໂດຍຍົກໃຫ້ເຫັນເຖິງຂໍ້ສະດວກ ແລະ ດ້ານດີ ທີ່ຄວນເສີມຂະຫຍາຍ, ຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງ ທີ່ຕ້ອງຊອກຫາວິທີການ ແລະ ມາດຕະການປັບປຸງແກ້ໄຂ, ສິ່ງທ້າທາຍຕ່າງໆ ແລະບາງບົດຮຽນທີ່ຖອດຖອນໄດ້ ເພື່ອເປັນຂໍ້ມູນພື້ນຖານລາຍງານຕໍ່ ຄປຈສພຊ ມີທິດຊີ້ນຳໃນຂັ້ນຕໍ່ໄປ ແລະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານບັນດາເຜົ່າທົ່ວແຂວງຄຳມ່ວນຖືກຕ້ອງຕາມແນວທາງຂອງພັກ ແລະລະບຽບກົດໝາຍຂອງລັດ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນ ແລະ ກ່າວສະແດງຄວາມຍ້ອງຍໍຊົມເຊີຍຕໍ່ສະພາປະຊາຊົນແຂວງຄຳມ່ວນ ທີ່ປະສານສົມທົບເປັນຂົວຕໍ່ໄປຍັງພາກສ່ວນທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ ໃນການເຂົ້າຮ່ວມເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ວຽກງານໃນຂົງເຂດບັນດາເຜົ່າຄັ້ງນີ້; ສະແດງຄວາມຂອບໃຈບັນດາພະແນກການ, ຂະແໜງການທີ່ກ່ຽວຂ້ອງທີ່ໄດ້ໃຫ້ການຮ່ວມມືແລະສະໜອງຂໍ້ມູນຮອບດ້ານ ເຊິ່ງຈະເປັນຂໍ້ມູນພື້ນຖານອັນສຳຄັນ, ເປັນບ່ອນອີງທີ່ຈະສັງລວມລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ແລະ ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຕໍ່ໜ້າ. ພ້ອມນັ້ນ, ກໍຮຽກຮ້ອງໃຫ້ທຸກພາກສ່ວນເຮັດໜ້າທີ່ຕາມພາລະບົດບາດຂອງຕົນດ້ວຍຄວາມເອົາໃຈໃສ່, ຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງ, ເອົາໃຈໃສ່ສຶກສາອົບຮົມພໍ່ແມ່ປະຊາຊົນໃຫ້ເຊື່ອມຊຶມເຂົ້າໃຈແຈ້ງ ແລະ ກຳແໜ້ນຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; ໃກ້ຊິດຕິດແທດ, ພົບປະ-ຮັບຕ້ອນປະຊາຊົນ, ເກັບກຳ ແລະ ນຳເອົາຄຳຄິດຄຳເຫັນ ແລະ ຄຳສະເໜີຂອງປະຊາຊົນ ເພື່ອສະເໜີຕໍ່ສະພາແຫ່ງຊາດ, ສະພາປະຊາຊົນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງພິຈາລະນາ, ແກ້ໄຂ ທັງຕິດຕາມຜົນຂອງການແກ້ໄຂ, ສະຫຼຸບລາຍງານການເຄື່ອນໄຫວວຽກງານໃນເຂດເລືອກຕັ້ງຂອງຕົນຢ່າງເປັນປົກກະຕິ, ຕໍ່ເນື່ອງ ແລະ ທັນກຳນົດເວລາ; ເພີ່ມທະວີການພົວພັນ, ປະສານສົມທົບກັນທັງພາຍໃນ ແລະ ພາຍນອກ, ລະຫວ່າງສູນກາງ ແລະ ທ້ອງຖິ່ນ ກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເປັນທ່າແຮງຕໍ່ການຊຸກຍູ້ ແລະ ຕິດຕາມການປະຕິບັດວຽກງານຂອງຂະແໜງການໃນຂົງເຂດບັນດາເຜົ່າໃຫ້ມີຜົນສຳເລັດ.

ໃນວັນທີ 16-17 ພຶດສະພາ, ຄະນະຍັງໄດ້ລົງຕິດຕາມກວດກາ ແລະ ຊຸກຍູ້ວຽກງານຢູ່ເມືອງບົວລະພາ ແລະ ເມືອງຫີນບູນ ຕື່ມອີກ.

**(ເອື້ອ ມະໂນສິງ)**

# ສະຫຼຸບວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ




(ສພຊ) - ວັນຈັນທີ 13 ພຶດສະພາ 2024 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ເປີດກອງປະຊຸມສະຫຼຸບວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ຂອງສະພາປະຊາຊົນແຂວງ ໂດຍການເປັນປະທານຂອງສະຫາຍ ທອງຄານ ວັດສະດາກອນ ເລຂາໜ່ວຍພັກສະພາປະຊາຊົນແຂວງ; ມີສະຫາຍ ຄຳເຜີຍ ງອນວັນຄຳ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ມີຄະນະໜ່ວຍພັກ, ສະມາຊິກພັກສົມບູນແລະແຂກເຊີນ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024 ຂອງໜ່ວຍພັກສະພາປະຊາຊົນແຂວງ, ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ທົ່ວແຂວງ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024; ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 13/ຄຈສພ, ລົງວັນທີ 11 ມັງກອນ 2024 ກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກວ່າດ້ວຍການເລືອກເຟັ້ນ, ແຕ່ງຕັ້ງ, ສັບປ່ຽນໜ້າທີ່ ຂອງພະນັກງານນຳພາ-ຄຸ້ມຄອງ; ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 14/ຄຈສພ, ລົງວັນທີ 11 ມັງກອນ 2024 ກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການຕີລາຄາພະນັກງານ; ບົດໂອ້ລົມຂອງສະຫາຍ ປອ. ບຸນທອງ ຈິດມະນີ ກຳມະການກົມການເມືອງ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ ຕໍ່ກອງປະຊຸມສະຫຼຸບວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ທົ່ວປະເທດ ປະຈຳປີ 2023.

ພ້ອມນັ້ນ, ໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຕິດຕາມກວດກາພັກ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສະພາປະຊາຊົນແຂວງ; ບົດສະຫຼຸບວຽກງານກວດກາທົ່ວແຂວງອຸດົມໄຊປະຈຳປີ 2023 ແລະ ທິດທາງຄາດໝາຍສູ້ຊົນ ປີ 2024 ຂອງຄະນະກວດກາແຂວງ ແລະ ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດເຫັນຕໍ່ 2 ຮ່າງບົດສະຫຼຸບດັ່ງກ່າວຢ່າງກົງໄປກົງມາ.

ໂອກາດດັ່ງກ່າວ, ກອງປະຊຸມຍັງໄດ້ຮັບຟັງການຜ່ານເອກະສານສຳຄັນຕ່າງໆຂອງພັກ-ລັດ ຈຳນວນໜຶ່ງຕື່ມອີກ.

# ສພຂ ແລະ ຖວທ ແຂວງຫົວພັນ ແລກປ່ຽນບົດຮຽນວຽກງານຫໍສະໝຸດ



(ສພຊ) - ຕອນເຊົ້າວັນທີ 14 ພຶດສະພາ 2024 ສະພາປະຊາຊົນແຂວງ (ສພຂ) ຫົວພັນແລະພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ຖວທ) ແຂວງຫົວພັນ ໄດ້ພົບປະແລກປ່ຽນບົດຮຽນທາງດ້ານການຄຸ້ມຄອງວຽກງານຫໍສະໝຸດ ຢູ່ທີ່ກອງວິຊາການ ວັດທະນະທຳ ແລະ ຫໍສະໝຸດ ພະແນກ ຖວທ ແຂວງຫົວພັນ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ສຸກມີໄຊ ສິງບຸນເຮືອງ ຮອງເລຂາທິການ ສພຂ ແລະ ທ່ານ ບຸນຕອງ ອິນທະປັນຍາ ຮອງຫົວໜ້າພະແນກ ຖວທ ແຂວງ, ມີບັນດາທ່ານຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ລັດຖະກອນທັງສອງພາກສ່ວນເຂົ້າຮ່ວມ.

ກອງປະຊຸມແລກປ່ຽນບົດຮຽນຄັ້ງນີ້, ທ່ານ ບຸນມີໄຊ ລັດທະບູນ ຫົວໜ້າກອງວິຊາການວັດທະນະທຳ ແລະ ຫໍສະໝຸດ ພະແນກ ຖວທ ແຂວງ ໄດ້ລາຍງານສະພາບລວມໂດຍຫຍໍ້ຂອງກອງວິຊາການ ວັດທະນະທຳ ແລະ ຫໍສະໝຸດ ເຊິ່ງເປັນກອງວິຊາການໜຶ່ງທີ່ມີພາລະບົດບາດໃນການສ້າງແຜນພັດທະນາວຽກງານຫໍສະໝຸດ, ຄຸ້ມຄອງ, ເກັບກຳຮັບໂຮມ ສື່ຄວາມຮູ້ ທີ່ເປັນສື່ສິ່ງພິມ ແລະ ການບໍລິການຂໍ້ມູນຂ່າວສານ ໃຫ້ແກ່ປວງຊົນລາວບັນດາເຜົ່າແລະຊັ້ນຄົນຕ່າງໆໃນສັງຄົມ ໄດ້ສຶກສາຄົ້ນຄວ້າດ້ານປະຫວັດສາດ, ເສດຖະກິດ ແລະ ວັດທະນະທຳ, ສ້າງແຜນພັດທະນາສູນວັດທະນະທຳເດັກ ແລະ ພັດທະນາ ບຸຄະລາກອນຂອງສູນກາງ, ຄົ້ນຄວ້າສ້າງ ແລະ ປັບປຸງໂຄງການຫລັກສູດການຮຽນ-ການສອນ ແລະ ເຄື່ອນໄຫວສິລະປະວັນນະຄະດີ, ວັດທະນະທຳ ແລະ ກິດຈະກຳຕ່າງໆ ເພື່ອຮັບໃຊ້ງານສຳຄັນຢູ່ພາຍໃນແຂວງ ແລະຕ່າງປະເທດ, ຈັດຕັ້ງສອນສິລະປະກຳ, ສິລະປະການສະແດງ ໃຫ້ແກ່ເຍົາວະຊົນ ແລະ ມວນຊົນທົ່ວໄປ ທີ່ມີຄວາມສົນໃຈຢາກຮຽນຮູ້ ແລະ ອື່ນໆ.

ໂອກາດດັ່ງກ່າວ, ວິຊາການຂອງກອງວິຊາການວັດທະນະທຳ ແລະ ຫໍສະໝຸດ ຍັງໄດ້ອະທິບາຍ, ແນະນຳວຽກງານຕົວຈິງ ໃຫ້ຮັບຮູ້ ແລະ ເຂົ້າໃຈຕື່ມອີກ; ພ້ອມດຽວກັນນັ້ນ, ທັງສອງຝ່າຍກໍໄດ້ຖ່າຍທອດຄວາມຮູ້, ປະກອບຄຳຄິດຄຳເຫັນແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ເປັນຕົ້ນແມ່ນການສັງລວມ, ຂຶ້ນແຜນຈັດເລກໝວດໝູ່ປຶ້ມ, ຫົວເລື່ອງ, ເອກະສານ, ສື່ສິ່ງພິມຕ່າງໆຢ່າງລະອຽດແຕ່ລະປະເພດ, ຕິດສັນປຶ້ມ, ຕິດເລກໝວດໝູ່ ແລະ ຂຽນບັດລາຍການປຶ້ມ, ຂຶ້ນບັນຊີປຶ້ມ, ການສ້າງປຶ້ມ, ການຊອກຫາແຫຼ່ງປຶ້ມ, ການບຳລຸງຮັກສາ ແລະ ວຽກອື່ນໆ ຢ່າງເປັນຂະບວນການຝຶກຝົນ. ທັງນີ້ ກໍເພື່ອນຳເອົາຄວາມຮູ້ຕົວຈິງທີ່ໄດ້ຮຽນຮູ້ ນຳມາປັບປຸງ, ພັດທະນາຫ້ອງສະໝຸດຂອງ ສພຂ ຫົວພັນ ໃຫ້ເປັນຮູບປະທຳໃນຕໍ່ໜ້າ ແລະ ດີຂຶ້ນ.

**(ນາງ ປຸ້ຍນິຕາ ເພັງມີໄຊ)**



**ລົງຕິດຕາມ...**

(ຕໍ່ຈາກໜ້າ 1)

(ສພຊ) - ທ່ານ ປອ. ເກດແກ້ວ ສີຫາລາດ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ໄດ້ລົງເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບການເຮັດທົດລອງຊັບສິນດິຈິຕອນ ແລະ ການທົດລອງດຳເນີນການຊື້-ຂາຍເງິນຄຣິບໂຕ ຢູ່ ສປປ ລາວ ຢູ່ແຂວງຈຳປາສັກ ແລະ ແຂວງເຊກອງ ລະຫວ່າງວັນທີ 14-17 ພຶດສະພາ 2024.

ທ່ານຮອງປະທານ ກສຕສ ພ້ອມດ້ວຍຄະນະ ໄດ້ເຂົ້າພົບທ່ານ ໂສມ ບຸດຕະກູນ ຮອງເຈົ້າແຂວງໆຈຳປາສັກ ແລະ ທ່ານ ຂັນຕີ ສີລະວົງສາ ຮອງເຈົ້າແຂວງໆເຊກອງ ເພື່ອແຈ້ງຈຸດປະສົງ ແລະ ລາຍງານກ່ຽວກັບການລົງມາເຮັດວຽກຄັ້ງນີ້; ຈາກນັ້ນ, ກໍໄດ້ຈັດກອງປະຊຸມຮ່ວມກັບສະພາປະຊາຊົນແຂວງ (ສພຂ) ແລະ ພະແນກການທີ່ກ່ຽວຂ້ອງ ຄື: ເຕັກໂນໂລຊີ ແລະ ການສື່ສານ, ພະລັງງານ ແລະ ບໍ່ແຮ່, ແຜນການ ແລະ ການລົງທຶນ, ແລະ ການເງິນ ເພື່ອຮັບຟັງລາຍງານການກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບການເຮັດທົດລອງຊັບສິນດິຈິຕອນ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ, ຊຸກຍູ້ສິ່ງເສີມ ແລະ ດ້ານອ່ອນຂໍ້ຄົງຄ້າງ ທີ່ຈະຕ້ອງຊອກຫາວິທີການແກ້ໄຂໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ທັງເປັນຂໍ້ມູນບ່ອນອີງສັງລວມລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອນຳເຂົ້າຄົ້ນຄວ້າ, ພິຈາລະນາ ແລະ ປະເມີນກ່ຽວກັບການເຮັດທົດລອງຊັບສິນດິຈິຕອນ ແລະ ການທົດລອງດຳເນີນການຊື້-ຂາຍເງິນຄຣິບໂຕ ຢູ່ ສປປ ລາວ ໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX.

ພາຍຫຼັງສຳເລັດກອງປະຊຸມ, ຄະນະຈາກສູນກາງຮ່ວມກັບບັນດາທ່ານປະທານ, ຮອງປະທານ ສພຂ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ແລະ ເຂດເລືອກຕັ້ງທີ 16 ແຂວງເຊກອງ ພ້ອມດ້ວຍພະແນກການທີ່ກ່ຽວຂ້ອງ ໄດ້ລົງເບິ່ງພື້ນທີ່ຕົວຈິງເພື່ອເກັບກຳຂໍ້ມູນຢູ່ໂຄງການທົດລອງການຂຸດຄົ້ນຊັບສິນດິຈິຕອນ ຂອງບໍລິສັດ ເອເຊຍ ລົງທຶນ ແລະ ບໍລິການ ຈຳກັດຜູ້ດຽວ ຮ່ວມກັບ ບໍລິສັດ ປີໄຊຊາຖືຮຸ້ນ ຈຳກັດຜູ້ດຽວ ຢູ່ເຂດບ້ານຈຽງໄຊ ເມືອງບາຈຽງ ແຂວງຈຳປາສັກ ແລະ ບໍລິສັດ ເອັດສ໌ຊີ ພາວເວີ ເອັນຈິເນຍຣິງ ຄອບໂປເຣຊັນ ຈຳກັດຜູ້ດຽວ ເຂດບ້ານໜອງບົງ ເມືອງລະມາມ ແຂວງເຊກອງ.

# ສພຂ ຫຼວງນ້ຳທາ ເຊື່ອມຊຶມມະຕິວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ



(ສພຊ)-ຕອນເຊົ້າຂອງວັນທີ 15 ພຶດສະພາ 2024 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາໄດ້ເຜີຍແຜ່ເຊື່ອມຊຶມຜັນຂະຫຍາຍມະຕິວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ໂດຍການເປັນປະທານຂອງທ່ານ ມີໄຊ ມີວິໄລ ເລຂາທິການສະພາປະຊາຊົນແຂວງ; ເຂົ້າຮ່ວມມີຄະນະເລຂາທິການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໂອກາດດັ່ງກ່າວ, ທ່ານມີໄຊ ມີວິໄລ ໄດ້ເຜີຍແຜ່ເຊື່ອມຊຶມຜັນຂະຫຍາຍມະຕິວ່າດ້ວຍການສ້າງເສດຖະກິດ ເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ໂດຍອີງຕາມແນວທາງປ່ຽນແປງໃໝ່ຂອງພັກ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກ ແລະ ບັນດາມະຕິຂອງຄະນະບໍລິຫານງານສູນກາງພັກໃນໄລຍະຜ່ານມາ, ເພື່ອຜັນຂະຫຍາຍທິດທາງການສືບຕໍ່ສ້າງເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ,ພັດທະນາເສດຖະກິດເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງທີ່ກຳນົດອອກໃນມະຕິຂອງຄະນະບໍລິຫານງານສູນກາງພັກ ພັກປະຊາຊົນປະຕິວັດລາວ ຢືນຢັນມາແຕ່ຕົ້ນແລ້ວວ່າ ດຳເນີນການປະຕິວັດຊາດ ປະຊາທິປະໄຕ ເພື່ອຕໍ່ສູ້ຍາດເອົາເອກະລາດແຫ່ງຊາດ, ອິດສະຫຼະພາບ, ສິດປະຊາທິປະໄຕ ແລະ ຄວາມເປັນເຈົ້າຂອງປະເທດຊາດອັນແທ້ຈິງມາສູ່ກຳມືຂອງປະຊາຊົນລາວບັນດາເຜົ່າ. ຈາກນັ້ນ, ກໍຍຶດໝັ້ນການເຊີດຊູຄວາມເປັນເອກະລາດເປັນເຈົ້າຕົນເອງ ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງໃຫ້ມີຄວາມໜັກແໜ້ນເປັນແນວທາງພັດທະນາອັນເປັນພື້ນຖານຂອງພັກເຮົາ, ໃນໄລຍະສິບກວ່າປີຜ່ານມາ ພັກເຮົາໄດ້ວາງແນວທາງການພັດທະນາທີ່ຢືນຢູ່ບົນພື້ນຖານການຂຸດຄົ້ນ, ນຳໃຊ້ກາລະໂອກາດ ແລະ ກຳລັງແຮງສັງລວມ ເພື່ອສ້າງບາດກ້າວບຸກທະລຸໃນການພັດທະນາ, ຮັບປະກັນການເຕີບໂຕຂອງເສດຖະກິດດ້ວຍຈັງຫວະທີ່ໝັ້ນທ່ຽງ ແລະ ຕໍ່ເນື່ອງ ສ້າງໃຫ້ມີຖານການຜະລິດ ແລະ ການບໍລິການທີ່ໜັກແໜ້ນ, ເຂັ້ມແຂງ, ຮັບປະກັນການພັດທະນາແບບຍືນຍົງ ແລະ ເປັນເຈົ້າຕົນເອງ ຜ່ານພຶດຕິກຳຕົວຈິງໃນການກໍ່ສ້າງ, ພັດທະນາ ແລະ ຍົກລະດັບພື້ນຖານເສດຖະກິດແຫ່ງຊາດ ໄປຕາມທິດດັ່ງກ່າວ ເຫັນວ່າຄວາມເປັນເຈົ້າຕົນເອງດ້ານເສດຖະກິດເມື່ອທຽບກັບເງື່ອນໄຂ, ຈຸດພິເສດ ຄວາມສາມາດ ແລະ ທ່າແຮງບົ່ມຊ້ອນທີ່ມີຢູ່ຂອງປະເທດເຮົາແມ່ນບໍ່ທັນຢູ່ໃນທ່ວງທ່າທີ່ຕັ້ງໜ້າ ແລະ ໜັກແໜ້ນເທື່ອ; ບົນພື້ນຖານຄວາມເປັນຈິງດັ່ງກ່າວ ພວກເຮົາມີຄວາມຈຳເປັນຢ່າງພາວະວິໄສ ເພື່ອຢືນຢັນຄວາມຖືກຕ້ອງຂອງແນວທາງ, ແຜນນະໂຍບາຍທີ່ໄດ້ວາງອອກພ້ອມນັ້ນກໍກວດກາ, ຕີລາຄາ ແລະປັບປຸງບາງນະໂຍບາຍ,ຍົກລະດັບຄວາມສາມາດດ້ານການບໍລິຫານຈັດການ, ພັດທະນາເສດຖະກິດຕາມທິດສ້າງເສດຖະກິດ ເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ເຊິ່ງຈະເປັນເງື່ອນໄຂພື້ນຖານຮັບປະກັນການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທັງໃນໄລຍະສັ້ນ ແລະ ໄລຍະຍາວ ກໍຄືການພັດທະນາເສດຖະກິດຕະຫຼາດຕາມທິດສັງຄົມນິຍົມຢູ່ປະເທດເຮົາໃຫ້ນັບມື້ນັບເປັນຮູບປະທຳຍິ່ງຂຶ້ນ.

**(ນາງ ອຳພອນ ສີປະເສີດ)**

# ສພຂ ວຽງຈັນ ປະກອບຄຳເຫັນໃສ່ຮ່າງກົດໝາຍທີ່ຈະນຳເຂົ້າກອງປະຊຸມສະໄໝສາມັນເທື່ອທີ 7



(ສພຊ)-ວັນທີ 14-16 ພຶດສະພາ 2024 ສະພາປະຊາຊົນແຂວງ (ສພຂ) ວຽງຈັນ ໄດ້ໄຂກອງປະຊຸມປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຫ້ອງວ່າການແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ບຸນສອນ ເພັດລາວັນ ປະທານ ສພຂ ວຽງຈັນ; ເຂົ້າຮ່ວມມີບັນດາສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງວຽງຈັນ, ຫົວໜ້າພະແນກ, ອົງການ, ກົມກອງທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ບຸນສອນ ເພັດລາວັນ ໄດ້ກ່າວເປີດກອງປະຊຸມວ່າ: ເພື່ອຮັບປະກັນໄດ້ເຖິງບັນດາເນື້ອໃນເອກະສານຮ່າງກົດໝາຍທີ່ໄດ້ນຳມາສະເໜີທາບທາມຄຳຄິດຄຳເຫັນໃນເທື່ອນີ້ ໃຫ້ມີເນື້ອໃນລະອຽດ, ຄົບຖ້ວນ, ສົມບູນ ແລະແທດເໝາະກັບສະພາບຕົວຈິງ, ສາມາດພິຈາລະນາຮັບຮອງ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບໝາກຜົນທີ່ດີ ສະເໜີມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ ພ້ອມກັນເພີ່ມທະວີຄວາມຮັບຜິດຊອບຂອງຕົນ ໃນການປະກອບຄຳຄິດ ຄຳເຫັນໃສ່ບັນດາຮ່າງກົດໝາຍຈຳນວນ 5 ສະບັບຄື: ຮ່າງກົດໝາຍວ່າດ້ວຍສະຫະກອນ (ສະບັບສ້າງໃໝ່); ຮ່າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ(ສະບັບປັບປຸງ); ຮ່າງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ); ຮ່າງກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອັດຈ໌ໄອວີ/ພະຍາດເອດ (ສະບັບປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ (ສະບັບສ້າງໃໝ່) ຢ່າງເລິກເຊິ່ງ ແລະ ກົງໄປກົງມາ, ສອດຄ່ອງຕາມແນວທາງຂອງພັກ, ລັດຖະທຳມະນູນ ແລະ ສະພາບຕົວຈິງຂອງຂົງເຂດວຽກງານ. ເຊິ່ງມີຄວາມເຊື່ອໝັ້ນ ວ່າກອງປະຊຸມທາບທາມຄຳຄິດຄຳເຫັນໃນຄັ້ງນີ້ ຈະເຮັດໃຫ້ບັນດາຮ່າງກົດໝາຍມີເນື້ອໃນລະອຽດ, ຄົບຖ້ວນ ແລະ ສົມບູນ ບັນລຸຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ ເຊິ່ງຜົນສຳເລັດດັ່ງກ່າວ ແມ່ນໝາກຜົນລວມຍອດແຫ່ງການສຸມສະຕິປັນຍາ, ຄວາມຮູ້, ປະສົບການ ແລະ ພຶດຕິກຳຕົວຈິງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ກໍຄືບັນດາຜູ້ແທນກອງປະຊຸມທັງໝົດທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້, ເຊິ່ງບັນຫາສຳຄັນແມ່ນໄດ້ພ້ອມກັນປະກອບຄຳຄິດ-ຄຳເຫັນ ໃສ່ຮ່າງກົດໝາຍຈຳນວນ 5 ສະບັບ ອັນເຮັດໃຫ້ບັນດາເນື້ອໃນຮ່າງກົດໝາຍມີຄວາມລະອຽດ, ຄົບຖ້ວນ, ສົມບູນຂຶ້ນກ່ວາເກົ່າ ສາມາດນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອ 7 ຂອງສະພາແຫ່ງຊາດຊຸດທີ IX ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ.

ພ້ອມນີ້, ທ່ານຍັງໄດ້ເນັ້ນໃຫ້ຜູ້ເຂົ້າຮ່ວມເອົາໃຈໃສ່ປະຕິບັດສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ໄປຕາມນະໂຍບາຍຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດ, ເຊື່ອໝັ້ນວ່າບັນດາທ່ານຈະສາມາດນຳພາ-ຊີ້ນຳ ແລະ ຈັດຕັ້ງປະຕິບັດໃຫ້ສຳເລັດຜົນຕາມລະດັບຄາດໝາຍທີ່ວາງໄວ້.

**(ນາງ ບູລາຕີ ແສນທະວົງ)**

# ສະພາປະຊາຊົນແຂວງອຸດົມໄຊ ສຳເລັດການທາບທາມຄຳເຫັນໃສ່ຮ່າງກົດໝາຍ 4 ສະບັບ



(ສພຊ) - ວັນທີ 14 ພຶດສະພາ 2024 ຢູ່ທີ່ຫ້ອງປະຊຸມຫ້ອງວ່າການແຂວງອຸດົມໄຊ, ສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມສຳເລັດການທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 4 ສະບັບ ໂດຍການເປັນປະທານຂອງທ່ານ ຄຳເຜີຍ ງອນວັນຄຳ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ມີທ່ານ ນາງ ຄຳພອນ ພົມມະຈັນ ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າ, ສອງກຳລັງ ປກຊ-ປກສ, ແຂກເຊີນ ແລະ ຄະນະຮັບຜິດຊອບເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງຜູ້ຕາງໜ້າຈາກພະແນກການກ່ຽວຂ້ອງສະເໜີຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອັກຄີໄພ (ສະບັບປັບປຸງ); ຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ); ຮ່າງກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍ ອາກອນມູນຄ່າເພີ່ມ (ສະບັບປັບປຸງ).

ຫຼັງຈາກນັ້ນ, ບັນດາທ່ານຜູ້ແທນກອງປະຊຸມໄດ້ເຊີດຊູຄວາມຮັບຜິດຊອບການເມືອງຕົນປະກອບຄຳຄິດຄຳເຫັນຕາມການສະເໜີຂອງປະທານ ແລະ ຕາມຄຳຖາມເຈາະຈີ້ມຂອງຄະນະຮັບຜິດຊອບຢ່າງກົງໄປກົງມາ, ເລິກເຊິ່ງ ແລະ ເປັນຂະບວນ.



# ສະພາປະຊາຊົນແຂວງຊຽງຂວາງ ທາບທາມຄຳເຫັນໃສ່ຮ່າງກົດໝາຍ 5 ສະບັບ



(ສພຊ) - ໃນວັນທີ 16 ພຶດສະພາ 2024 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຊຽງຂວາງ ໄດ້ເປີດກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍຈຳນວນ 5 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX; ພາຍໃຕ້ການເປັນປະທານຂອງທ່ານ ບຸນໂຮມ ເທດທານີ ປະທານສະພາປະຊາຊົນແຂວງຊຽງຂວາງ; ເຂົ້າຮ່ວມມີທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 9, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງແປກ, ຄະນະເລຂາທິການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ຕາງໜ້າຂະແໜງການທີ່ກ່ຽວຂ້ອງແລະພະນັກງານຂອງສະພາປະຊາຊົນແຂວງເຂົ້າຮ່ວມ.

ກົດໝາຍທີ່ນຳເຂົ້າທາບທາມຄັ້ງນີ້ ມີກົດໝາຍຈຳນວນ 5 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ, ຮ່າງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ, ຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ຮ່າງກົດໝາຍວ່າດ້ວຍ ການຕ້ານການຟອກເງິນ ເຊິ່ງຜູ້ແທນກອງປະຊຸມໄດ້ມີຄວາມເອົາໃຈໃສ່ຄົ້ນຄວ້າ, ພິຈາລະນາຕາມຄຳຖາມເຈາະຈີ້ມ ແລະ ຍົກບາງບັນຫາປິ່ນອ້ອມ ໂດຍໄດ້ຍົກໃຫ້ເຫັນການຈັດຕັ້ງປະຕິບັດຕົວຈິງ ຕໍ່ຮ່າງກົດໝາຍດັ່ງກ່າວ ກ່ຽວກັບການກຳນົດໂຄງປະກອບຂອງກົດໝາຍ, ບັນດາເນື້ອໃນບາງມາດຕາຂອງກົດໝາຍ ຢ່າງພາວະວິໄສ, ກົງໄປກົງມາ, ເລິກເຊິ່ງເຖິງຖອງ ເພື່ອເຮັດໃຫ້ແຕ່ລະກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ, ສອດຄ່ອງກັບສະພາບຄວາມເປັນຈິງແລະສາມາດຮັບຮອງໄດ້ຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສາມາດນຳໄປຈັດຕັ້ງປະຕິບັດເຂົ້າໃນວຽກງານຂອງຂະແໜງການທີ່ກ່ຽວຂ້ອງໃຫ້ໄດ້ຮັບຜົນດີໃນຕໍ່ໜ້າ.

ໃນຕອນທ້າຍປະທານກອງປະຊຸມໄດ້ມີຄຳເຫັນໂອ້ລົມ ແລະ ສັງລວມບັນດາຄຳຄິດເຫັນຂອງຜູ້ແທນກອງປະຊຸມ ເພື່ອສະຫຼຸບລາຍງານໃຫ້ສະພາແຫ່ງຊາດອີກດ້ວຍ.

**(ນາງ ສຸກສະຫວັນ ອິນທະແສງ)**




# ອົບຮົມການສ້າງ, ປັບປຸງ ແລະ ຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ



(ສພຊ) - ລະຫວ່າງວັນທີ 16-17 ພຶດສະພາ 2024 ທີ່ເມືອງຍົມມະລາດ ແຂວງຄຳມ່ວນ, ສະພາປະຊາຊົນແຂວງຄຳມ່ວນ ໄດ້ຈັດກອງປະຊຸມເຝິກອົບຮົມກ່ຽວກັບການຕິດຕາມກວດກາການສ້າງ, ປັບປຸງ, ການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ໂດຍການເປັນປະທານຂອງທ່ານ ບຸນມີ ພິມມະສອນ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ, ປະທານສະພາປະຊາຊົນແຂວງຄຳມ່ວນ; ເຂົ້າຮ່ວມ ແລະ ເປັນວິທະຍາກອນຂອງທ່ານ ອຳໄພ ຈິດມານົນ ຮອງປະທານກຳມາທິການກົດໝາຍ ສະພາແຫ່ງຊາດ, ມີຮອງປະທານສະພາປະຊາຊົນຂັ້ນແຂວງ, ຮອງເຈົ້າແຂວງ, ເຈົ້າເມືອງຍົມມະລາດ, ບັນດາທ່ານຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງ 10 ຕົວເມືອງ, ຕາງໜ້າຈາກພະແນກການ ແລະ ອົງການທຽບເທົ່າ, ຄະນະກອງບັນຊາການ ປກຊ-ປກສ, ນັກວິທະຍາກອນຈາກສູນກາງ ແລະ ພະນັກງານເສນາທິການຊ່ວຍວຽກຂອງສະພາປະຊາຊົນແຂວງຄຳມ່ວນ ເຂົ້າຮ່ວມທັງໝົດ 100 ທ່ານ ຍິງ 20 ທ່ານ.

ຕະຫຼອດໄລຍະກອງປະຊຸມ ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຮັບຟັງແລະສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າແລກປ່ຽນຄຳຄິດຄຳເຫັນບົດຮຽນທິດສະດີ ແລະສົມທຽບໃສ່ກັບການປະຕິບັດວຽກງານຕົວຈິງຜ່ານມາ ຢ່າງກົງໄປກົງມາ ເປັນຕົ້ນແມ່ນກ່ຽວກັບບົດສະເໜີການຕິດຕາມກວດກາການສ້າງ ແລະປັບປຸງນິຕິກຳໃຕ້ກົດໝາຍ; ການກວດກາຄວາມຖືກຕ້ອງຂອງຮ່າງນິຕິກຳໃຕ້ກົດໝາຍ;ການຕິດຕາມກວດກາການສ້າງ, ປັບປຸງກົນໄກຕິດຕາມກວດກາ, ໂຄສະນາເຜີຍແຜ່ສ້າງສະຕິເຄົາລົບນິຕິກຳໃຕ້ກົດໝາຍທີ່ປະກາດໃຊ້ແລ້ວ ແລະ ບົດສະເໜີ ການຕິດຕາມກວດກາການປະເມີນນິຕິກຳໃຕ້ກົດໝາຍ.

ຕອນທ້າຍກອງປະຊຸມ, ທ່ານ ບຸນມີ ພິມມະສອນ ໄດ້ມີຄຳເຫັນວ່າ: ກອງປະຊຸມເຝິກອົບຮົມຄັ້ງນີ້ ມີຄວາມສຳຄັນຫຼາຍເປັນໂອກາດທີ່ດີໃຫ້ຜູ້ເຂົ້າຮ່ວມຍົກສູງຂີດຄວາມສາມາດໃນການສ້າງ, ການປັບປຸງ ແລະ ການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ, ເຂົ້າໃຈຂັ້ນຕອນຕ່າງໆຢ່າງລະອຽດ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີຄວາມເປັນເອກະພາບກັນ, ມີຄວາມຖືກຕ້ອງສອດຄ່ອງກັບກົດໝາຍ.

ໃນໂອກາດດຽວກັນ, ທ່ານຍັງໄດ້ສະແດງຄວາມຊົມເຊີຍ ແລະ ຂອບໃຈຕໍ່ຜູ້ໃຫ້ທຶນຈັດກອງປະຊຸມເຝິກອົບຮົມໃນຄັ້ງນີ້ ເຊິ່ງໄດ້ຮັບການສະໜັບສະໜູນໂດຍ: ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະສະພາປະຊາຊົນຂັ້ນແຂວງ, ສະເຕັບສ໌ (STEPs) ແລະ ໂຄງການຂອງມູນນິທິເວສມິນສະເຕີ (WFD).

**(ເອື້ອ ມະໂນສິງ)**

# ສຳເລັດການລົງເຜີຍແຜ່ກົດໝາຍທີ່ເມືອງໄຊບູລີ, ຊົນນະບູລີ ແລະ ພະລານໄຊ



(ສພຊ) - ໃນລະຫວ່າງວັນທີ 14-16 ພຶດສະພາ 2024 ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ເຄື່ອນໄຫວໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍສະພາປະຊາຊົນແຂວງແລະກົດໝາຍວ່າດ້ວຍການແກ້ຄຳຮ້ອງທຸກ ເຊິ່ງນຳໂດຍທ່ານ ພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງ, ທ່ານ ສະແຫວງ ບັນທະວົງ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມີຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຮອງເລຂາທິການສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວເຜີຍແຜ່ໃນ 3 ເມືອງໂດຍໄດ້ຮັບການຕ້ອນຮັບຈາກບັນດາທ່ານເຈົ້າເມືອງແລະຮອງເຈົ້າເມືອງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ບັນດາທ່ານກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດອຳນາດການປົກຄອງບ້ານ ໃນເທສະບານເມືອງ ເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ.

ການເຜີຍແຜ່ໃນຄັ້ງນີ້, ກໍເພື່ອເຮັດໃຫ້ພະນັກງານການນຳຂອງທຸກຫ້ອງການໃນເມືອງເຂົ້າໃຈແລະເປັນເອກະພາບກັນໃນການຈັດຕັ້ງປະຕິບັດລະບຽບກົດໝາຍ ໂດຍສະເພາະການຈັດຕັ້ງຂັ້ນຕອນໃນການຮ້ອງທຸກຂອງພໍ່ແມ່ປະຊາຊົນຜູ້ທີ່ມີສິດເລືອກຕັ້ງ ແລະ ສ້າງຄວາມຮັບຮູ້, ເຂົ້າໃຈໃຫ້ແກ່ທ້ອງຖິ່ນຮາກຖານ, ພະນັກງານ-ລັດຖະກອນ ແລະ ປະຊາຊົນລາວບັນດາເຜົ່າຕໍ່ເນື້ອໃນກົດໝາຍ ແນໃສ່ເຮັດໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງສາມາດປະຕິບັດພາລະບົດບາດຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນໄດ້ເປັນຢ່າງດີ; ພາຍຫຼັງທີ່ໄດ້ເຜີຍແຜ່ທັງສອງກົດໝາຍສຳເລັດແລ້ວ ປະທານກອງປະຊຸມຍັງໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມກອງປະຊຸມສົນທະນາແລກປ່ຽນຄຳຄິດຄຳເຫັນ ໂດຍສະເພາະບັນຫາທີ່ເກີດຂຶ້ນໃນການຈັດຕັ້ງປະຕິບັດລະບຽບກົດໝາຍທີ່ຜ່ານມາຂອງທ້ອງຖິ່ນ.

ໃນຕອນທ້າຍ, ປະທານກອງປະຊຸມກໍໄດ້ສະຫຼູບຕີລາຄາ ພ້ອມທັງມີທິດຊີ້ນຳໃນການລົງເຜີຍແຜ່ໃນຄັ້ງນີ້ ໂດຍທ່ານໄດ້ເນັ້ນໃຫ້ບັນດາທ່ານຜູ້ເຂົ້າຮ່ວມກອງປະຊຸມຈຶ່ງໄດ້ນຳເອົາບົດຮຽນໃນຄັ້ງນີ້ ນຳໄປຈັດຕັ້ງຜັນຂະຫຍາຍໃຫ້ກວ້າງຂວາງໄປໃນທົ່ວສັງຄົມ ໂດຍສະເພາະການຈັດຕັ້ງ ແລະພະນັກງານທີ່ຮັບຜິດຊອບໃນການແກ້ໄຂຄຳຮ້ອງທຸກ ລວມເຖິງປະຊາຊົນບັນດາເຜົ່າ ໃຫ້ໄດ້ຮັບຮູ້ ແລະ ເຂົ້າໃຈ ເນື້ອໃນໃຫ້ມີຄວາມເປັນເອກະພາບກັນກ່ຽວກັບການນຳໃຊ້ ແລະ ການຈັດຕັ້ງປະຕິບັດກົດໝາຍ.

# ສພຂ ສາລະວັນ ສືບຕໍ່ທາບທາມຄຳເຫັນ ໃສ່ຮ່າງກົດໝາຍ 5 ສະບັບ ຄັ້ງທີ II




(ສພຊ) - ໂດຍສືບຕໍ່ປະຕິບັດຕາມຄຳແນະນຳຂອງກຳມາທິການກົດໝາຍສະພາແຫ່ງຊາດ ກ່ຽວກັບໃຫ້ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງໃນຂອບເຂດທົ່ວປະເທດ ຈັດຕັ້ງການທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 10 ສະບັບ ກ່ອນທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ7 ຂອງສະພາແຫ່ງຊາດ ຊຸດທີ IX ໃນຕົ້ນເດືອນມິຖຸນາ ທີ່ຈະເຖິງນີ້; ໃນວັນທີ 16 ພຶດສະພາ 2024 ທີ່ຫ້ອງປະຊຸມສະໂມສອນແຂວງສາລະວັນ, ສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍ 5 ສະບັບ ຄັ້ງທີ II; ໂດຍການເປັນປະທານກອງປະຊຸມຂອງທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14, ຮອງປະທານສະພາປະຊາຊົນແຂວງສາລະວັນ; ເຂົ້າຮ່ວມມີທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ, ມີປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ບັນດາທ່ານສະມາຊິກສະພາປະຊາຊົນອ້ອມຂ້າງແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງ ແລະພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງ.

ທັງນີ້, ກໍເພື່ອເປັນການສືບຕໍ່ການທາບທາມຄຳເຫັນໃສ່ຮ່າງກົດໝາຍທີ່ຍັງຄ້າງ 5 ສະບັບໃຫ້ສຳເລັດ, ມີການລະດົມຄຳຄິດເຫັນເປັນເອກະພາບຢ່າງກວ້າງຂວາງ, ເປັນປະໂຫຍດດ້ວຍເຫດ ແລະ ຜົນໃນການສ້າງ ແລະ ປັບປຸງ ສາມາດເຮັດໃຫ້ຮ່າງກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ແລະສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນປັດຈຸບັນ ເຮັດໃຫ້ການຄຸ້ມຄອງລັດ ຄຸ້ມຄອງສັງຄົມດ້ວຍກົດໝາຍ ມີຜົນສັກສິດ ແລະ ດັດປັບສາຍພົວພັນໃນສັງຄົມໃຫ້ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີຮ່າງກົດໝາຍ 5 ສະບັບ ປະກອບມີ: ຮ່າງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ແລະ ຕ້ານອັກຄີໄພ (ສະບັບປັບປຸງ); ຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ); ຮ່າງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ); ຮ່າງກົດໝາຍວ່າດ້ວຍການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບສ້າງໃໝ່) ແລະ ຮ່າງກົດໝາຍວ່າດ້ວຍສົ່ງເສີມການລົງທຶນ (ສະບັບປັບປຸງ); ຈາກນັ້ນ, ຜູ້ແທນທີ່ເຂົ້າຮ່ວມໄດ້ພ້ອມກັນເຊີດຊູຄວາມຮັບຜິດຊອບ, ສຸມສະຕິປັນຍາ ຄົ້ນຄວ້າແລກປ່ຽນ ແລະ ປະກອບຄຳຄິດຄຳເຫັນຕໍ່ເນື້ອໃນແຕ່ລະໝວດແຕ່ລະມາດຕາຂອງ 5 ຮ່າງກົດໝາຍ ຢ່າງມີຈຸດສຸມ ແລະ ເປັນຂະບວນຢ່າງຟົດຟື້ນ;

**(ດີລຳພົນ ພົມມະຈັນ)**

# ຕິດຕາມກວດກາວຽກງານສາສະໜາ ແລະ ຊົນເຜົ່າ



(ສພຊ) - ໃນວັນທີ 15 ພຶດສະພາຜ່ານມາ, ທ່ານ ລີຈົ້ງ ເກຍເປົາ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງລ້ອງຊານ, ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະບັນດາເຜົ່າ ສະພາປະຊາຊົນແຂວງໄຊສົມບູນພ້ອມດ້ວຍທີມງານ ໄດ້ລົງເຄື່ອນໄຫວເຮັດວຽກຮ່ວມກັບອົງການປົກຄອງເມືອງທ່າໂທມ ໂດຍການຕ້ອນຮັບ ແລະ ເປັນປະທານຂອງທ່ານ ຄຳເຜີຍ ແສງສະຫວ່າງ ຮອງເລຂາພັກເມືອງ, ຮອງເຈົ້າເມືອງ ທັງເປັນ ສສຂ ປະຈຳເລືອກຕັ້ງເມືອງທ່າໂທມ ພ້ອມດ້ວຍຫົວໜ້າ-ຮອງຫົວໜ້າຫ້ອງການ, ອົງການ, ກົມກອງ ອ້ອມຂ້າງເມືອງເຂົ້າຮ່ວມ.

ໃນໂອກາດນີ້, ໄດ້ຮັບຟັງການລາຍງານສະພາບການເຄື່ອນໄຫວສາສະໜາ ແລະ ວຽກງານຊົນເຜົ່າ ທີ່ມີບັນຫາພົ້ນເດັ່ນໃນທົ່ວເມືອງ ຈາກຫົວໜ້າຫ້ອງການພາຍໃນເມືອງເຊິ່ງສາມາດຮູ້ໄດ້ວ່າ ການເຄື່ອນໄຫວຂອງແຕ່ລະສາສະໜາ ຜູ້ເຊື່ອຖືບາງຈຳນວນແມ່ນປະຕິບັດຈັດຕັ້ງບໍ່ແທດເໝາະກັບກົດໝາຍທີ່ພັກ-ລັດວາງອອກໄດ້ເທົ່າທີ່ຄວນ ແລະ ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານແກ້ໄຂຄວາມທຸກຍາກແລະວຽກງານພັດທະນາຊົນນະບົດຂອງເມືອງ ຈາກຫົວໜ້າຫ້ອງການປ່າໄມ້ເມືອງທ່າໂທມ ເຊິ່ງເຫັນວ່າຍັງມີຄວາມຫຍຸ້ງຍາກໃນຫຼາຍໆດ້ານ ທີ່ພັກລັກ-ລັດຕ້ອງໄດ້ປັບປຸງ, ແກ້ໄຂ ແລະ ລົງພົບປະກັບພໍ່ແມ່ປະຊາຊົນບັນດາເຜົ່າຢ່າງໃກ້ຊິດຕິດແທດ ເພື່ອອຳນວຍຄວາມສະດວກໃຫ້ແກ່ການທຳການຜະລິດເກີດດອກອອກຜົນ ແລະ ເພີ່ມລາຍໄດ້ເຂົ້າສູ່ຄອບຄົວຂອງປະຊາຊົນ ແລະຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳຄິດເຫັນ ແລະ ສົນທະນາແລກປ່ຽນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດຕົວຈິງແບບຄືກຄົ້ນຢ່າງກົງໄປກົງມາ.

ໂອກາດດຽວກັນນີ້, ທ່ານ ລີຈົ້ງ ເກຍເປົາ ຍັງໄດ້ເຊື່ອມຊຶມດຳລັດເລກທີ 315/ລບ ວ່າດ້ວຍການປົກປ້ອງ ແລະ ການເຄື່ອນໄຫວສາສະໜາ ໃນ ສປປ ລາວ ແລະ ເຊື່ອມຊຶມດຳລັດເລກທີ 207/ລບວ່າດ້ວຍວຽກງານຊົນເຜົ່າ ເພື່ອໃຫ້ບັນດາອົງການປົກຄອງເມືອງແລະພາກສ່ວນກ່ຽວຂ້ອງ ໄດ້ເພີ່ມທະວີຕິດຕາມກວດກາໃນການເຄື່ອນໄຫວຂອງທຸກໆສາສະໜາພາຍໃນເມືອງ ໃຫ້ຖືກຕາມກົດໝາຍທີ່ພັກ-ລັດວາງອອກ ໂດຍບໍ່ໃຫ້ຜູ້ເຊື່ອຖືມີພຶດຕິກຳທີ່ລະເມີດ ຫຼື ປະພຶດສິ່ງທີ່ບໍ່ເໝາະສົມອອກມາສູ່ບ້ານເມືອງ.

**(ນາງ ອຳໄພພອນ ແກ້ວວິໄລ)**

# ສະພາປະຊາຊົນແຂວງຫຼວງພະບາງ ທາບທາມ ຮ່າງກົດໝາຍ 5 ສະບັບ ຂົງເຂດຍຸຕິທຳ



(ສພຊ) - ໃນລະຫວ່າງວັນທີ 15-16 ພຶດສະພາ 2024 ທີ່ສະພາປະຊາຊົນແຂວງຫຼວງພະບາງ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງຫຼວງພະບາງ ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍ ຈຳນວນ 5 ສະບັບ ໃນຂົງເຂດຍຸຕິທຳ ພາຍໃຕ້ການເປັນປະທານຂອງທ່ານ ວົງສະຫວັນ ເທບພະຈັນ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ; ເຂົ້າຮ່ວມມີບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ທີ່ເປັນກຳມະການສັງກັດຢູ່ກຳມາທິການຍຸຕິທຳ ແລະ ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມີບັນດາທ່ານຫົວໜ້າພະແນກ-ຮອງຫົວໜ້າພະແນກ ແລະ ພະນັກງານຫຼັກແຫຼ່ງທີ່ກ່ຽວຂ້ອງພາຍໃນສະພາປະຊາຊົນແຂວງຫຼວງພະບາງ.

ທັງນີ້, ກໍເພື່ອເປັນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາປະຊາຊົນແຂວງ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ເຊິ່ງກອງປະຊຸມໄດ້ເປີດກວ້າງໃຫ້ບັນດາທ່ານຜູ້ແທນກອງປະຊຸມໄດ້ມີຄຳເຫັນແລກປ່ຽນຕໍ່ເນື້ອໃນຂອງຮ່າງກົດໝາຍ ຈຳນວນ 5 ສະບັບ ທີ່ນຳມາຄົ້ນຄວ້າໃນຄັ້ງນີ້ ເປັນຕົ້ນແມ່ນການປັບປຸງເນື້ອໃນ, ບັນດາຄຳສັບທີ່ເຂົ້າໃຈຍາກ ບາງຄຳສັບທີ່ບໍ່ເໝາະສົມໄດ້ຕັດອອກ ແລະ ປັບປຸງບາງມາດຕາ ທີ່ເຫັນວ່າບໍ່ສອດຄ່ອງກັບສະພາບການຈັດຕັ້ງປະຕິບັດວຽກງານຕົວຈິງ ໃນໄລຍະໃໝ່ນີ້ ເພື່ອນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II ທີ່ຈະໄດ້ຈັດຂຶ້ນໃນເວລາອັນໃກ້ນີ້.

# ສພຂ ຊຽງຂວາງ ທາບທາມກົດໝາຍ ທີ່ຈະນຳເຂົ້າກອງປະຊຸມສະໄໝສາມັນເທື່ອທີ 7



(ສພຊ) - ໃນວັນທີ 14 ພຶດສະພາ 2024 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຊຽງຂວາງ ໄດ້ເປີດກອງປະຊຸມທາບທາມຮ່າງກົດໝາຍ ຈຳນວນ 5 ສະບັບໂດຍການເປັນທານຂອງທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງ ຜູ້ຊີ້ນຳວຽກງານຍຸດຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງ; ເຂົ້າຮ່ວມຂອງທ່ານບຸນໂຮມ ເທບທານີ ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງປະຈຳເມືອງແປກ, ຫົວໜ້າ-ຮອງຫົວໜ້າພະແນກການ, ຫົວໜ້າອົງການທຽບເທົ່າພະແນກການ, ພາກສ່ວນທີ່ກ່ຽວຂ້ອງ, ຫົວໜ້າ-ຮອງໜ້າຂະແໜງ ແລະ ພະນັກງານສະພາປະຊາຊົນແຂວງເຂົ້າຮ່ວມ.

ທັງນີ້, ກໍເພື່ອຮັບປະກັນໃຫ້ເນື້ອໃນຂອງຮ່າງກົດໝາຍຈຳນວນ 5 ສະບັບຄື: ຮ່າງກົດໝາຍວ່າດ້ວຍສະຫະກອນ, ຮ່າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ຮ່າງກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອັດຈ໌ໄອວີຫຼືພະຍາດເອດແລະຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ ໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ກ່ອນທີ່ຈະນຳໄປພິຈາລະນາ, ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX.

ໃນກອງປະຊຸມ, ຜູ້ແທນກອງປະຊຸມໄດ້ພ້ອມກັນເຊີດຊູຄວາມຮັບຜິດຊອບ, ສຸມສະຕິປັນຍາເພື່ອຄົ້ນຄວ້າປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຂອງ 5 ຮ່າງກົດໝາຍຕາມການເຈາະຈີ້ມບາງເນື້ອໃນຂອງບັນດາຮ່າງກົດໝາຍ ທີ່ສະພາແຫ່ງຊາດສົ່ງໃຫ້ຢ່າງມີຈຸດສຸມເຊິ່ງຈະເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບນຳໄປຄົ້ນຄວ້າ, ວິເຄາະວິໄຈ ເພື່ອນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ປັບປຸງຮ່າງກົດໝາຍແຕ່ລະສະບັບ ເພື່ອເຮັດໃຫ້ກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້.

**(ນາງ ສຸກສະຫວັນ ອິນທະແສງ)**




# ຈັງຫວະຊີວິດ

# ດົ້ນກົບເມກ

ເຫດຜົນຫຼັກທີ່ຢາກຂຽນເລື່ອງການປ່ຽນແປງຊີວິດນັ້ນ ຍ້ອນວ່າໄດ້ສັງເກດເຫັນຫຼາຍຄົນບໍ່ກ້າປ່ຽນແປງ ບໍ່ກ້າປ່ຽນໜ້າທີ່, ບໍ່ກ້າຍ້າຍວຽກ ຄິດຢ້ານບໍ່ກ້າວໜ້າ ຫຼືບໍ່ກ້າເລືອກຫົວໜ້າໃໝ່ ຢ້ານບໍ່ກ້າວໜ້າໄດ້ດີຄືຢູ່ບ່ອນເກົ່າ ແຕ່ຕາມຫຼັກສັດຈະທຳສາກົນແລ້ວ ທຸກຢ່າງຕ້ອງມີການປ່ຽນແປງ ມັນບໍ່ເຄີຍຢຸດນິ້ງ ຂຶ້ນຢູ່ກັບວ່າເຮົາຈະປ່ຽນແບບໃດຈຶ່ງດີຂຶ້ນ ເຊິ່ງອາດອາໄສຄວາມກ້າຫານຕັດສິນໃຈ ກໍໃນເມື່ອໜ້າວຽກຢູ່ບ່ອນເກົ່າ ຫົວໜ້າກໍບໍ່ເປີດໂອກາດໃຫ້ສະແດງສີມື ຫຼື ຫົວໜ້າຄອຍແຕ່ກິນຜົນງານລູກນ້ອງ.

ຜູ້ຂຽນຂໍຍົກຕົວຢ່າງ ບົດຮຽນໃນເລື່ອງສາມກົກ ທີ່ມີກຸ່ມທະຫານ ໂດຍມີ ລີ່ໂປ້ ເປັນຜູ້ນຳ ເຖິງຈະມີຄົນເກັ່ງຫຼາຍຄົນ ແຕ່ ລີ່ໂປ້ ບໍ່ເຄີຍເປີດໂອກາດໃຫ້ສະແດງສີມື ໄລຍະຕໍ່ມາເມື່ອ ລີ່ໂປ້ ພ່າຍແພ້ແກ່ ໂຈໂສ ບັນດາຄົນເກັ່ງເຫຼົ່ານັ້ນ ຈຶ່ງເລືອກປ່ຽນນາຍໃໝ່ເຊັ່ນ ຕຽວລ້ຽວ, ຈິງປ໋າ ແລະ ຕັນກຸ໋ນ ເລືອກຢູ່ກັບ ໂຈໂສ ສ້າງຜົນງານໂດດເດັ່ນ ກ້າວຂຶ້ນໄປສູ່ຕຳແໜ່ງຂຸນນາງຊັ້ນສູງ ເຊິ່ງເປັນຮອງແຕ່ ສຸມາອີ້ ເທົ່ານັ້ນ, ບົດຮຽນຂອງສາມຄົນນັ້ນເປັນຕົວຢ່າງ ເມື່ອເປັນຫົວໜ້າແລ້ວ ຊີວິດດີຂຶ້ນ ເພາະວ່າຫົວໜ້າຄົນໃໝ່ໃຈໃຫຍ່ ໃຈກວ້າງສົ່ງເສີມ ແລະ ເປີດໂອກາດໃຫ້ລູກນ້ອງສ້າງຜົນງານສະແດງສະຕິປັນຍາ ແລ້ວຍົກຍ້ອງເຊີດຊູຕາມຄວາມຮູ້ ແລະ ຜົນງານທີ່ເຂົາເຮັດໄດ້ ຕ່າງກັບຫົວໜ້າຄົນເກົ່າທີ່ໃຈແຄບ ສະຫຼາດໂກງ ຄອຍແຕ່ກິນຫົວລູກນ້ອງ ຈົນເຮັດໃຫ້ບໍລິວານເບື່ອໜ່າຍ ຂາດກຳລັງໃຈສ້າງຜົນງານ.

ບົດຮຽນການປ່ຽນອາຊີບ-ປ່ຽນຫົວໜ້າຄົນໃໝ່ ຫຼາຍຄັ້ງເຮົາຕ້ອງໄດ້ກ້າຫານ ທຳໃຈເມື່ອເລືອກປ່ຽນແລ້ວຕ້ອງກ້າຍອມຮັບຜົນຈະເກີດຂຶ້ນຕາມມາ ເຊັ່ນ: ທຳໃຈ ແລະ ເຮັດໜ້າທີ່ເຕັມຄວາມສາມາດ, ເຮັດດີໃຫ້ຫົວໜ້າຮູ້ເຫັນຜົນງານ ວ່າເປັນຄົນເກັ່ງມີສີມື ແຕ່ຈົ່ງຈື່ໄວ້ວ່າ: ການສ້າງຄວາມດີອາດມີຜົນດີກັບບາງຄົນ ແຕ່ຫົວໜ້າບາງຄົນກໍເປັນປະເພດແລ້ງນ້ຳໃຈ ເຮັດດີເກືອບຕາຍກໍຍັງບໍ່ເຫັນຄຸນຄ່າລູກນ້ອງ ແບບນີ້ກໍມີ, ອີງຕາມຂໍ້ມູນ ຜູ້ຂຽນໄດ້ອ່ານ ເຂົາໄດ້ບອກວ່າ ລັກສະນະຫົວໜ້າທີ່ດີຕ້ອງໃຈກວ້າງເປັນຜູ້ສົ່ງເສີມລູກນ້ອງສະແດງສີມື, ຫົວໜ້າມີແຜນໄລຍະຍາວ ແລະ ມີວິໄສທັດກວ້າງໄກ, ເປັນຜູ້ສະໜັບສະໜູນການຕັດສິນໃຈແຕກຕ່າງໄດ້ ຜົນງານດີຂອງລູກນ້ອງ, ເປັນຜູ້ສື່ສານທີ່ດີກັບລູກນ້ອງ ບໍ່ເລືອກປະຕິບັດເຂົ້າຂ້າງມີອະຄະຕິ ຄິດວ່າບໍ່ພຽງແຕ່ຫົວໜ້າທີ່ນັ້ນທີ່ເລືອກລູກນ້ອງ ແຕ່ລູກນ້ອງກໍມີສິດເລືອກຫົວໜ້າໄດ້ເຊັ່ນກັນ.

ສະເໜີແລກປ່ຽນ.






# ເຄື່ອງມື – ອຸປະກອນ

'ເຄື່ອງມື' ແລະ 'ອຸປະກອນ' ເປັນຄຳຮ່ວມຄວາມໝາຍ ທີ່ມີຄວາມໝາຍ ແລະ ການໃຊ້ຄື ແລະ ຕ່າງກັນດັ່ງນີ້:

'ເຄື່ອງມື' ເປັນຄຳປະສົມປະເພດຄຳນາມ ປະກອບດ້ວຍຄຳວ່າ 'ເຄື່ອງ' ໝາຍເຖິງ "ສິ່ງຂອງຕ່າງໆ" ແລະ 'ມື' ໝາຍເຖິງ "ອະໄວຍະວະສ່ວນທີ່ຕໍ່ຈາກປາຍແຂນ".

ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ "ເຄື່ອງມື" ກໍໝາຍເຖິງ "ສິ່ງຂອງສຳລັບເປັນເຄື່ອງຫາກິນ ຫຼືໃຊ້ເຮັດວຽກງານຕ່າງໆ ເຊັ່ນ

- ແຫແມ່ນເຄື່ອງມືໃນການຫາປາ.
- ຈົກ, ຄາດ, ສຽມ ເປັນເຄື່ອງມືໃນການເຮັດອາຊີບກະສິກຳ.
- ເຄື່ອງມືຂອງຊ່າງໄມ້ ມີ ຄ້ອນ, ເລື່ອຍ, ສິ່ວ, ກົບ ແລະ ອື່ນໆ.

ພ້ອມກັນນັ້ນ, ເຄື່ອງມືຍັງມີຄວາມໝາຍອ້ອມທີ່ໝາຍເຖິງ "ຄົນຫຼືສິ່ງທີ່ໃຊ້ເຮັດປະໂຫຍດຄືກັບເຄື່ອງມື" ເຊັ່ນ

- ເຮົາຢ່າຊູ່ໄປຕົກເປັນເຄື່ອງມືຂອງພວກຄົນບໍ່ດີ.
- ຍ້ອນຕົກເປັນເຄື່ອງມືຂອງພວກຄອນເຊັນເຕີ ດວງຊວຍຈຶ່ງກາຍເປັນນັກຕົວະຕົ້ມທາງສັງຄົມອອນລາຍ.

'ອຸປະກອນ' ເປັນຄຳນາມຈາກເຄົ້າປາລີ-ສັນສະກິດ Upakaraṇa (ອຸປະກະຣະນະ) ແລ້ວແປງສຽງເປັນລາວວ່າ 'ອຸບປະກອນ' ແຕ່ຂຽນເປັນ 'ອຸປະກອນ' ໝາຍເຖິງ "ເຄື່ອງມື, ເຄື່ອງໃຊ້, ເຄື່ອງຊ່ວຍແຮງ, ເຄື່ອງປະກອບ" ເຊັ່ນ

- ຢູ່ຮ້ານນີ້ ເພິ່ນຂາຍອຸປະກອນການຂຽນ.
- ວິທີຕິດຕັ້ງ ອຸປະກອນ GPS ໃຊ້ກັບລົດຈັກ.
- ໂຮງຮຽນຢູ່ເຂດຫ່າງໄກສອກຫຼີກ ໄດ້ຮັບອຸປະກອນການສຶກສາ ແລະ ກິລາຈາກຜູ້ໃຈບຸນ.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຖືກ | ຜິດ |
|---|---|
| ສັ່ງສອນ | ຊັ່ງສອນ |
| ຊັ່ງຊາ | ສັ່ງຊາ |
| ສູ່ຂໍ | ຊູ່ຂໍ |
| ຊູ່ມື້ | ສູ່ມື້ |
| ຕົບແສ່ງ | ຕົບແຊ່ງ |
| ສາບແຊ່ງ | ສາບແສ່ງ |
| ສ່ວຍສາອາກອນ | ຊ່ວຍສາອາກອນ |
| ຊ່ວຍເຫຼືອ | ສ່ວຍເຫຼືອ |
| ເສື່ອນອນ | ເຊື່ອນອນ |
| ເຊື່ອໃຈ | ເສື່ອໃຈ |




# ວິທີເຮັດວຽກ

## ພາກທີ 6
## ວິທີນຳ

ການນຳ ແລະ ການກວດກາ: ຄວາມເວົ້າທີ່ວ່າ: "ບໍ່ພຽງ ແຕ່ຕ້ອງນຳປະຊາຊົນ ແຕ່ຍັງຕ້ອງຖາມ ແລະ ຮຽນນຳປະຊາຊົນອີກ", ນັ້ນໝາຍຄວາມວ່າແນວໃດ ?.

ຄວາມໝາຍນັ້ນແປວ່າ: ຜູ້ນຳບໍ່ຄວນອວດອີ່ງ, ແຕ່ຄວນເຂົ້າໃຈສະພາບການຢ່າງເລິກເຊິ່ງ. ຄວາມເຂົ້າໃຈ ແລະ ບົດຮຽນຂອງເຮົາເທົ່ານັ້ນຍັງບໍ່ພຽງພໍເພື່ອໃຫ້ນຳປະຊາຊົນຢ່າງຖືກຕ້ອງໄດ້. ເພາະສະນັ້ນນອກຈາກບົດຮຽນຂອງຕົນແລ້ວ ຜູ້ນຳຕ້ອງໃຊ້ບົດຮຽນຂອງສະມາຊິກພັກ ແລະ ຂອງປະຊາຊົນອີກ ເພື່ອຕື່ມໃສ່ບົດຮຽນຂອງຕົນເອງໃຫ້ກວ້າງຂວາງ ແລະ ຄົບຖ້ວນ, ໝາຍຄວາມວ່າ ຊົ່ວນາທີ ຫຼື ວິນາທີໜຶ່ງ ກໍບໍ່ຄວນໃຫ້ມີການຫຼຸດຜ່ອນການຕິດຕໍ່ພົວພັນ ລະຫວ່າງພວກເຮົາກັບປະຊາຊົນ, ໝາຍຄວາມວ່າພວກເຮົາຕ້ອງຫງ່ຽງຫູຟັງຄຳເຫັນຂອງສະມາຊິກຂອງພັກ, ຂອງປະຊາຊົນ, ຕະຫຼອດຄຳເຫັນຂອງຜູ້ບໍ່ສຳຄັນ ກໍຕ້ອງຟັງຄືກັນ.

1. ນຳ ແປວ່າແນວໃດ ?

ມັນເປັນຄວາມຈິງ ທີ່ບໍ່ແມ່ນວ່າຈະນັ່ງຢູ່ໃນຫ້ອງການແລ້ວວາງແຜນການ ແລະ ອອກຄຳສັ່ງ. ນຳຖືກແປວ່າເຮັດດັ່ງລຸ່ມນີ້:

1. ຕ້ອງຕົກລົງທຸກບັນຫາດ້ວຍວິທີຖືກຕ້ອງ, ຢາກເຮັດໄດ້ ແນວນັ້ນ ແນ່ນອນຕ້ອງປຽບທຽບໃສ່ບົດຮຽນປະຊາຊົນ ເພາະວ່າ ປະຊາຊົນແມ່ນຜູ້ທີ່ທົນສູ້ກັບຜົນແຫ່ງການນຳຂອງພວກເຮົາ.

ອ່ານຕໍ່ສະບັບໜ້າ...

## ສຸກສະບາຍທາຍໂລດ

# 8 ເຫດຜົນທີ່ຄວນກິນຂີງທຸກວັນ

ໂດຍ: ທິວກະທິ



ຂີງ ເປັນສ່ວນປະສົມໃນການປະກອບອາຫານແລະຍັງມີສັບພະຄຸນເປັນຢາທີ່ໃຊ້ກັນມາດົນນານແລ້ວ ເຊິ່ງຂີງມີປະໂຫຍດຫຼາຍຕໍ່ສຸຂະພາບ ເຊັ່ນ: ບັນເທົາອາການປວດ, ບັນຫາການຍ່ອຍອາຫານ ແລະບັນເທົາອາການປວດຮາກໄດ້ ແລະ ຍັງມີສັບພະຄຸນຫຼາຍໆຢ່າງອີກດັ່ງນີ້:

1. ຂີງຊ່ວຍບັນເທົາອາການປວດກ້າມເນື້ອໄດ້ 25% ແລະ ຍັງບັນເທົາອາການປວດປະຈຳເດືອນໄດ້;

2. ຊ່ວຍຫຼຸດຄໍເລສເຕີຣອນ ແລະ ສາມາດຫຼຸດຄວາມສ່ຽງເປັນໂຣກຫົວໃຈໄດ້ອີກ;

3. ຊ່ວຍບັນເທົາການຍ່ອຍອາຫານເພາະຂີງມີສານຟີນອລ ເຊິ່ງບັນເທົາການອັກເສບຂອງລະບົບທາງເດີນອາຫານ; ນອກຈາກນີ້, ຍັງກະຕຸ້ນການຜະລິດນ້ຳບີແລະນ້ຳລາຍ ທີ່ຊ່ວຍສົ່ງອາຫານ ແລະທາດແຫຼວສິ່ງຜ່ານໄປສູ່ທາງເດີນອາຫານ;

4. ຊ່ວຍຕ້ານອາການອັກເສບຂອງກະດູກ ເພາະພະຍາດຂໍ້ກະດູກອັກເສບ ເປັນບັນຫາທີ່ເກີດຂຶ້ນໄດ້ກັບທຸກຄົນເຊິ່ງເປັນການເສື່ອມຂອງຂໍ້ຕໍ່ ເຊິ່ງຈະນຳໄປສູ່ຄວາມເຈັບປວດໃນຂໍ້ຕໍ່ທີ່ຮ້າຍແຮງ;

5. ຂີງ ຊ່ວຍການພັດທະນາການເຮັດວຽກຂອງສະໝອງໃຫ້ດີຂຶ້ນ ເພາະອາຍຸຫຼາຍຂຶ້ນ ຈະເຮັດໃຫ້ມີອາການອັກເສບຊ້ຳເຮື້ອ ເຊິ່ງຈະນຳໄປສູ່ພາວະສະໝອງເສື່ອມ ເຊັ່ນ: ພະຍາດອັນໄຊເມີ;

6. ຊ່ວຍບັນເທົາອາການປວດຮາກ ການບໍລິໂພກຂີງສົດ ຫຼື ຊາຂີງ ຈະສົ່ງຜົນດີໃນການປິ່ນປົວອາການປວດຮາກ ໂດຍສະເພາະແມ່ຍິງຖືພາ, ອາການແພ້ທ້ອງ ແລະ ປິ່ນປົວພະຍາດມະເຮັງໄດ້;

7. ຊ່ວຍຫຼຸດຄວາມສ່ຽງຂອງພະຍາດຫົວໃຈໄດ້ຢ່າງໜ້ອຍ 10%;

8. ຂີງ ມີຄຸນສົມບັດຕ້ານມະເຮັງດ້ວຍການກິນສານສະກັດຈາກຂີງ 2 ກຣາມຕໍ່ວັນ ຈະຊ່ວຍເຮັດໃຫ້ໄຊໂຕໄຄທີ່ກະຕຸ້ນໃຫ້ເກີດການອັກເສບໃນລຳໄສ້ໃຫຍ່ຫຼຸດລົງ.

**ຂໍ້ມູນຈາກ:**
**www.laopost.com**



## ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສາວຈົ້ມ

❋ ໄດ້ຍິນຮອດວັນສຳຄັນ ນັ້ນກໍຄື**ວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ** ເຫັນວ່າຫຼາຍພາກສ່ວນ**ກະກຽມກິດຈະກຳ**ເພື່ອສະເຫຼີມສະຫຼອງໃຫ້ສອງວັນດັ່ງກ່າວມີບັນຍາກາດຟົດຟື້ນ ມ່ວນຊື່ນ ຢ່າງເປັນຂະບວນການ ສຳຄັນແມ່ນແຜນກະກຽມ**ປູກຕົ້ນໄມ້** ຄຽງຄູ່ໄປກັບການ**ປູກໃຈ ປູກຈິດສຳນຶກ**ໃຫ້ແກ່ເດັກ ເພາະ "**ເດັກນ້ອຍໃນວັນນີ້ ຄືຜູ້ໃຫຍ່ໃນວັນໜ້າ**" "**ເດັກຄືອະນາຄົດຂອງຊາດ**" "**ເດັກສະຫຼາດພາຊາດຈະເລີນ**" ເພິ່ນວ່າ!

❋ ແລະ ຍັງຢູ່ໃນບັນຍາກາດ**ຕ້ອນຮັບສອງວັນດັ່ງກ່າວ** ກໍເລີຍ**ທົບທວນຂ່າວ**ກ່ຽວກັບປ່າໄມ້ ເຊິ່ງເຫັນໄດ້ຜ່ານມາ ພັກ ແລະ ລັດ ໄດ້ວາງ**ນະໂຍບາຍເປັນຄາດໝາຍສູ້ຊົນລົບຮອດປີ 2030** ວ່າ ຈະເພີ່ມຄວາມປົກຫຸ້ມ ແລະ ຮັກສາເນື້ອທີ່ປ່າໃຫ້ໄດ້ **70% ປະມານ 16,5 ລ້ານເຮັກຕາ** ຂອງເນື້ອທີ່ທົ່ວປະເທດ...ແຕ່ສັງເກດເຫັນວ່າ ປັດຈຸບັນ ຂ່າວຄາວ ຄົນໃສເຫຼົ້າກະແສສຽງ ວຽກປົກປັກຮັກສາ ປ່າ ຄືເດີຍເວົ້າ ຫຼືບໍ່ໄປຕາມເປົ້າ ທາງສຽງພົດສະບັ່ນ ອັນນີ້ ຈິງບໍ່ຈິງບໍ່ຮູ້ **ລໍໃຫ້ຮັບຕອງ** ນຳກັນເດີ!




## ຊ່ວຍກັນປູກປ່າ

# ສຸກສະຫວັນ ພົມມະວົງ

❋ ຮຽນຍັງຈຳຈື່ໄດ້
ສາວຄູສອນ-
ກຽມຄວາມພ້ອມ
ອອກແຮງງານຮ່ວມຫ້ອງ
ຄາວກ່ອນຕອນຮຽນ
ສັ່ງມາຂຽນໄວ້
ວານຫາມວນໝູ່
ກຽມພ້ອມຮັບມື

❋ ຄູບອກວັນເດັກນ້ອຍ
ຝາຍຄົນຊຸມ
ຕອນນີ້ຄຳນຶງພໍ້
ມະໂນພາບຕ່ອຍຕ້ອງ
ກຽມປູກພືກສາ
ປູກກັນຄົນຕື່ນ
ຄຳຄູສອນກ່າວ
ເຫັນໄດ້ຄ່າຄຸນ

❋ ພໍແຕ່ມາຮອດບ້ານ
ຍຸງຍາງແດງ
ສີຂຽວເຂັ້ມ
ຫາກເມື່ອມັນໃຫຍ່ຂຶ້ນ
ຫາຫັ່ນແນວພັນ
ປູກຝັງດິນໄວ້
ເຕັມມືພຽນປູກ
ຢືນຕົ້ນຮົ່ມເຢັນ

❋ ລົງມືປຸ່ນປູກເບ້ຍ
ແຍງລຳໃບ
ເປັນແນວລ້ອມ
ແປງປ່ຽນໂລກເຮັ່ງຮ້ອນ
ວັນຜ່ານຫຼາຍປີ
ໃຫຍ່ກາຍຫົວພົ້ນ
ປັບຈູນອາກາດ
ຄືນໃຫ້ຊຸ່ມເຢັນ

❋ ໃຫຍ່ຂຶ້ນຮຽນຈຶ່ງຮູ້
ແຕ່ວ່າຫຼາຍຄົນຕັດ
ຈຶ່ງໄດ້ມາຂໍຮ້ອງ
ຊວນປູກຍຸດໂຄ່ນໄມ້
ຫາກປູກຢູ່ຄົນດຽວ
ແບ່ງປັນນຳໃຊ້
ຫາຄົນໂຮມຮ່ວມ
ຮັກສາໄວ້ຊ່ວຍກັນ ທ່ານເອີຍ!




## ຊວນຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ແມ່ແອ

ແມ່ແອເອີ້ນໃສ່ລູກວ່າ: ອີ່ຫຼ້າເອີຍ ອັດຕູແດ່ ທາງນອກມັນໜາວ

- ຊິອັດເຮັດຫຍັງ ເຖິງຊິອັດປະຕູທາງນອກກະໜາວຄືເກົ່ານັ້ນລະ

- ບະ! ອີ່ອັນນີ້ !!!



## ຄະຕິເຕືອນໃຈ

# ດອກຫຍ້າ

ອັນວ່າ ຍູງຍາງໄມ້ ລົມຕີຍັງຫັກຄ່ອງ
ບາດວ່າ ປ່າຫຍ້າປ້ອງ ລົມຕ້ອງກໍບໍ່ເໜືອນ

# ອີຢູ ອະນຸມັດກົດໝາຍ ຕ້ານການໃຊ້ຄວາມຮຸນແຮງ ຕໍ່ແມ່ຍິງເປັນຄັ້ງທໍາອິດ




ສໍານັກຂ່າວ AFP ລາຍງານຈາກນະຄອນຫຼວງບຣຸກແຊນ, ປະເທດແບນຊິກເມື່ອວັນທີ08 ພຶດສະພາ 2024ວ່າ: ບັນດາປະເທດສະມາຊິກສະຫະພາບເອີຣົບ (ອີຢູ) ມີມະຕິສະໜັບສະໜູນກົດໝາຍວ່າດ້ວຍການລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງສະບັບທໍາອິດ.

ກົດໝາຍສະບັບນີ້ ມີຈຸດປະສົງເພື່ອປົກປ້ອງແມ່ຍິງໃນ 27 ປະເທດສະມາຊິກອີຢູ ຈາກຄວາມຮຸນແຮງທາງເພດ, ການບັງຄັບໃຫ້ແຕ່ງງານ, ການຕັດອະໄວຍະວະເພດຍິງ (female genital mutilation) ແລະ ການລ່ວງລະເມີດທາງອອນລາຍ; ລັດຖະສະພາເອີຣົບໄດ້ຮັບຮອງເອົາຮ່າງກົດໝາຍດັ່ງກ່າວໃນເດືອນເມສາຜ່ານມາ, ໂດຍເມື່ອບັນດາປະເທດສະມາຊິກລົງມະຕິຢ່າງເອກະສັນ, ຈະຖືເປັນຂັ້ນຕອນສຸດທ້າຍກ່ອນຈະກາຍເປັນກົດໝາຍ.

ທ່ານ ພອນ ແວນ ທິກເຊລຕ໌ (Paul van Tichelt) ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງຍຸຕິທໍາ ແລະ ທະເລເໜືອ ຂອງແບນຊິກ ກ່າວວ່າ "ກົດໝາຍນີ້ຈະຮັບປະກັນໃນທົ່ວອີຢູ ວ່າຜູ້ທີ່ກະທໍາຜິດຈະຖືກລົງໂທດຢ່າງໜັກແລະຜູ້ເຄາະຮ້າຍຈະໄດ້ຮັບການຊ່ວຍເຫຼືອຕາມທີ່ພວກເຂົາຕ້ອງການໄດ້ຮັບ".

ນອກຈາກນັ້ນ, ກົດໝາຍສະບັບນີ້ໄດ້ກໍານົດຄວາມຜິດທາງອາຍາຕໍ່ການລັກຕິດຕາມທາງໄຊເບີ (cyber stalking), ການຄຸກຄາມທາງໄຊເບີ ແລະ ການຍຸຍົງທາງໄຊເບີເພື່ອກໍ່ໃຫ້ເກີດຄວາມກຽດຊັງ ຫຼື ຄວາມຮຸນແຮງ ມີໂທດຈໍາຄຸກຕໍ່າສຸດຕັ້ງແຕ່ 1-5 ປີ ຂຶ້ນກັບອາດຊະຍາກໍາ; ຍິ່ງໄປກວ່ານັ້ນ, ຖ້າຜູ້ຖືກເຄາະຮ້າຍເປັນເດັກນ້ອຍ, ຄູ່ສົມລົດ ຫຼື ອະດີດຄູ່ສົມລົດ ລວມທັງຜູ້ຕາງໜ້າສາທາລະນະ (public representative), ນັກຂ່າວ ຫຼື ຜູ້ປົກປ້ອງສິດທິມະນຸດ ການລົງໂທດຈະໜັກຂຶ້ນກວ່າເກົ່າ.

ລັດສະມາຊິກໃນອີຢູຈະຕ້ອງປ່ຽນຄໍາສັ່ງດັ່ງກ່າວໃຫ້ກາຍເປັນກົດໝາຍລະດັບຊາດ ພາຍໃນ 3 ປີ.

# ສໍາເລັດການລົງຄະແນນສຽງເລືອກຕັ້ງ ລັດຖະສະພາອີຣານ ຮອບທີ 2

ອີງຕາມສໍານັກຂ່າວແຫ່ງຊາດອີຣານ (IRNA) ລາຍງານວ່າ: ການລົງຄະແນນສຽງເລືອກຕັ້ງສະມາຊິກລັດຖະສະພາຊຸດທີ XII ຂອງອີຣານ ໄດ້ສິ້ນສຸດລົງໃນເວລາ22:00 ໂມງ(ຕາມເວລາທ້ອງຖິ່ນ) ໃນວັນສຸກທີ 10 ພຶດສະພາຜ່ານມາ ຫຼັງຈາກ 14 ຊົ່ວໂມງຕິດຕໍ່ກັນ; ການລົງຄະແນນສຽງໃນເບື້ອງຕົ້ນ ໄດ້ກໍານົດຈະສິ້ນສຸດລົງໃນເວລາ 18:00 ໂມງ, ແຕ່ໄດ້ຂະຫຍາຍເວລາອອກໄປສາມຄັ້ງ.

ການເລືອກຕັ້ງໄດ້ຈັດຂຶ້ນຢູ່ໜ່ວຍປ່ອນບັດເກືອບ 11,500 ແຫ່ງ ໃນ 22 ເຂດເລືອກຕັ້ງ ໃນ 15 ແຂວງ ແລະ 47 ເມືອງ ໂດຍມີຜູ້ສະໝັກທັງໝົດ 90 ທ່ານ ໄດ້ເຂົ້າຮ່ວມການແຂ່ງຂັນເພື່ອຍາດເອົາ 45 ທີ່ນັ່ງທີ່ຍັງເຫຼືອຢູ່ໃນຮອບຄັດເລືອກ, ໃນຂະນະທີ່ 245 ທີ່ນັ່ງໄດ້ຖືກຕັດສິນແລ້ວໃນຮອບທໍາອິດທີ່ຈັດຂຶ້ນເມື່ອວັນທີ 01 ມີນາຜ່ານມາ.


ທ່ານ ຮາດີ ທາຮັນ ນາຊິບ

ຜູ້ນໍາສູງສຸດຂອງອີຣານ ທ່ານ ອາລີ ຄາເມເນອີ (Ali Khamenei) ໄດ້ໄປໃຊ້ສິດລົງຄະແນນສຽງຢູ່ໜ່ວຍປ່ອນບັດແຫ່ງໜຶ່ງໃນນະຄອນຫຼວງເຕເຣຣານ ທັນທີຫຼັງຈາກການລົງຄະແນນສຽງໄດ້ເລີ່ມຂຶ້ນໃນເວລາ 8 ໂມງເຊົ້າ; ໃນການກ່າວຄໍາປາໄສຕໍ່ບັນດານັກຂ່າວຫຼັງຈາກລົງຄະແນນສຽງແລ້ວ, ຜູ້ນໍາອີຣານ ໄດ້ເນັ້ນຢໍ້າເຖິງຄວາມສໍາຄັນຂອງການເລືອກຕັ້ງສໍາລັບປະເທດ ໂດຍກ່າວວ່າ ການເລືອກຕັ້ງຮອບທີ 2 ແມ່ນມີຄວາມສໍາຄັນເທົ່າກັບການເລືອກຕັ້ງຮອບທໍາອິດ.

ພາຍຫຼັງການລົງຄະແນນສຽງໄດ້ສິ້ນສຸດລົງ, ໂຄສົກສະພາລັດຖະທໍາມະນູນອີຣານ (Constitutional Council) ທ່ານ ຮາດີ ທາຮັນ ນາຊິບ (Hadi Tahan Nazif) ໃຫ້ຮູ້ວ່າ: ຂະບວນການນັບບັດເລືອກຕັ້ງໄດ້ເລີ່ມຂຶ້ນຢູ່ບາງໜ່ວຍ ແລະ ກ່າວຕື່ມວ່າ ບໍ່ມີລາຍງານການກະທໍາລະເມີດໃດໆໃນລະຫວ່າງຂະບວນການປ່ອນບັດລົງຄະແນນສຽງ.

ທ່ານ ທາຮັນ ນາຊິບ ກ່າວວ່າ ລັດຖະສະພາຊຸດທີ XII ຄາດວ່າຈະເລີ່ມວາລະການດໍາລົງຕໍາແໜ່ງຢ່າງເປັນທາງການ ໃນວັນທີ 27 ພຶດສະພານີ້.

**ແຫຼ່ງຂ່າວ: ຊິນຮວາ**

# ລັດຖະສະພາອີຣານ ອະນຸມັດປ່ຽນ ວັນພັກລັດຖະການເປັນ "ວັນສຸກ-ວັນເສົາ"



ລັດຖະສະພາອີຣານ ອະນຸມັດການປ່ຽນແປງຊົ່ວໂມງເຮັດວຽກໃນແຕ່ລະອາທິດສໍາລັບພະນັກງານ-ລັດຖະກອນທັງໝົດ ໂດຍກໍານົດໃຫ້ເຮັດວຽກ 40 ຊົ່ວໂມງຕໍ່ອາທິດ ແລະ ມີວັນພັກທ້າຍອາທິດທີ່ເປັນວັນສຸກ ກັບ ວັນເສົາ.

ສໍານັກຂ່າວແຫ່ງຊາດອີຣານ (IRNA) ລາຍງານເມື່ອວັນທີ16ພຶດສະພາຜ່ານມາວ່າ: ກົດໝາຍດັ່ງກ່າວ ເຊິ່ງຍັງຕ້ອງໄດ້ຮັບການຮັບຮອງຈາກສະພາລັດຖະທໍາມະນູນ (Constitutional Council) ຈະມີຜົນບັງຄັບໃຊ້ແທນຮູບແບບການເຮັດວຽກໃນປັດຈຸບັນ ທີ່ກໍານົດໃຫ້ພະນັກງານລັດເຮັດວຽກ 44 ຊົ່ວໂມງຕໍ່ອາທິດ ແລະ ໄດ້ພັກເຄິ່ງມື້ໃນວັນພະຫັດກັບວັນສຸກໝົດມື້ ເນື່ອງຈາກວ່າມັນເປັນວັນສູດມົນ (prayer) ແລະວັນພັກສໍາລັບຊາວມຸດສະລິມ.

ການປ່ຽນແປງຊົ່ວໂມງເຮັດວຽກຂ້າງເທິງ ໄດ້ຖືກໂຕ້ວາທີຢ່າງດຸເດືອດ ເຊິ່ງຜົນໄດ້ຮັບອອກມາດັ່ງນີ້: ມີສະມາຊິກສະພານິຕິບັນຍັດເຫັນດີ136ທ່ານ, ຄັດຄ້ານ 66 ທ່ານ ແລະ ງົດອອກສຽງ 3 ທ່ານ.

ເຖິງແມ່ນວ່ານັກເສດຖະສາດຫຼາຍຄົນກ່າວເຕືອນວ່າການເລືອກເອົາວັນພະຫັດ ແລະ ວັນສຸກ ເປັນວັນພັກທ້າຍອາທິດ ມີຄວາມສ່ຽງຕໍ່ການເຮັດໃຫ້ອີຣານຢູ່ໂດດດ່ຽວຫຼາຍຂຶ້ນ ຈາກການຈໍາກັດການເຮັດທຸລະກໍາລະຫວ່າງປະເທດສ່ວນໃຫຍ່ ໄວ້ທີ່ 3 ວັນຕໍ່ອາທິດ.

**ແຫຼ່ງຂ່າວ: AFP**

# ພັກກໍາອໍານາດຂອງແອັດສະປາຍ ຊະນະເລືອກຕັ້ງສະພາແຄວ້ນກາຕາລຸນຍາ




ສໍານັກຂ່າວ AFP ລາຍງານຈາກເມືອງບາກເຊໂລນ, ປະເທດແອັດສະປາຍ ວ່າ: ຜົນຂອງການເລືອກຕັ້ງທົ່ວໄປໃນແຄວ້ນກາຕາລຸນຍາ (Catalunya) ທາງພາກເໜືອຂອງປະເທດແອັດສະປາຍ ທີ່ຈັດຂຶ້ນເມື່ອວັນອາທິດທີ 12 ພຶດສະພາຜ່ານມາ, ປາກົດວ່າພັກສັງຄົມນິຍົມກາຕາລຸນຍາ ເຊິ່ງເປັນສາຂາໃນແຄວ້ນຂອງພັກສັງຄົມນິຍົມ ທີ່ເປັນພັກລັດຖະບານຊຸດປັດຈຸບັນຂອງນາຍົກລັດຖະມົນຕີ ເປໂດຣ ຊານເຊດ (Pedro Sanchez) ໄດ້ຮັບເລືອກຕັ້ງ 42 ຈາກທັງໝົດ 135 ທີ່ນັ່ງໃນສະພາແຄວ້ນ, ເພີ່ມຂຶ້ນ 9 ທີ່ນັ່ງ ຈາກການເລືອກຕັ້ງເມື່ອປີ 2021.

ຂະນະທີ່ພັກຮ່ວມກັນເພື່ອກາຕາລຸນຍາ ຂອງທ່ານ ຄານ ປຸຍເດມອງ (Carles Puigdemont) ອະດີດຜູ້ນໍາແຄວ້ນກາຕາລຸນຍາ ທີ່ລີ້ໄພຢູ່ຕ່າງປະເທດຫຼັງຈາກການເຄື່ອນໄຫວແບ່ງແຍກດິນແດນຈົນຖືກດໍາເນີນຄະດີ ໄດ້ 35 ທີ່ນັ່ງ, ເປັນອັນດັບທີ 2; ສ່ວນພັກຝ່າຍຊ້າຍແຫ່ງສາທາລະນະລັດກາຕາລຸນຍາແລະພັກປະຊາຊົນກາຕາລຸນຍາ ໄດ້ 20 ແລະ 15 ທີ່ນັ່ງ ຕາມລໍາດັບ, ທັງ 3 ພັກ ຫຼຸດລົງຈາກການເລືອກຕັ້ງຄັ້ງກ່ອນນີ້.

ເຖິງແນວໃດກໍຕາມ, ການທີ່ບໍ່ມີພັກການເມືອງໃດໄດ້ຮັບການເລືອກຕັ້ງແບບໄດ້ສຽງສ່ວນຫຼາຍຢ່າງເດັດຂາດ ຄືຢ່າງໜ້ອຍ 68 ທີ່ນັ່ງ, ໝາຍຄວາມວ່າລັດຖະບານທ້ອງຖິ່ນຊຸດໃໝ່ຂອງແຄວ້ນກາຕາລຸນຍາ ຈະຕ້ອງເປັນລັດຖະບານປະສົມ, ແຕ່ພັກສັງຄົມນິຍົມກາຕາລຸນຍາ ມີໂອກາດຫຼາຍກວ່າ.

ຍິ່ງໄປກວ່ານັ້ນ, ຜົນຂອງການສໍາຫຼວດຄວາມຄິດເຫັນຂອງປະຊາຊົນໃນແຄວ້ນກາຕາລຸນຍາ ໂດຍຫ້ອງການສະຖິຕິກາຕາລຸນຍາ ເປີດເຜີຍເມື່ອບໍ່ດົນກ່ອນການເລືອກຕັ້ງ ປາກົດວ່າການສະໜັບສະໜູນການແບ່ງແຍກດິນແດນ ໄດ້ຫຼຸດລົງຈາກ 49% ໃນປີ2017 ເປັນ42%.

ເຫັນໄວ້ ໄດ້ບົດຮຽນ

# ພັດທະນາຕົວເມືອງໃຫຍ່ໄປຕາມທິດສີຂຽວ

❖ ວິເສດ ສະແຫວງສຶກສາ

ພາຍໃນປີ 2050 ຄືຍັງອີກ 26 ປີຂ້າງໜ້າ, ທາງການຫວຽດນາມໄດ້ໝາຍໝັ້ນຄັ້ນມື ເຮັດໃຫ້ອັດຕາການປ່ອຍກາກບອນໃຫ້ເປັນສູນ (0) ດັ່ງນັ້ນ ການພັດທະນາເສດຖະກິດ-ສັງຄົມ ໃນທຸກໆ ຂະແໜງ ຕ້ອງປະຕິບັດໃຫ້ສອດຄ່ອງກັບແຜນຍຸດທະສາດ ໃນການປົກປັກຮັກສາສິ່ງແວດລ້ອມ. ເວົ້າສະເພາະການພັດທະນາບັນດາຕົວເມືອງນັ້ນ,ທາງການຫວຽດນາມໄດ້ເອົາໃຈໃສ່ເປັນພິເສດເພາະບັນດາຕົວເມືອງດັ່ງກ່າວນຳໃຊ້ປະມານ 2/3 ຂອງພະລັງງານທັງໝົດຂອງປະເທດ ແລະ ມີສ່ວນສ້າງມົນລະພິດໃນອັດຕາປະມານ 70% ຂອງທົ່ວປະເທດເຊັ່ນກັນ. ສະຖິຕິທາງການຂອງຫວຽດນາມໃຫ້ຮູ້ວ່າ ຫວຽດນາມມີຊຸມຊົນຕົວເມືອງໃຫຍ່ທັງໝົດ 860 ເຂດ (ສະຖິຕິເມື່ອ 3 ປີຜ່ານມາ) ທີ່ຈັງຫວະການເຕີບໂຕເພີ່ມຂຶ້ນເກືອບ 40% ຈາກຕົວເລກດັ່ງກ່າວສາມາດເວົ້າໄດ້ວ່າ ເຂດຕົວເມືອງໃຫຍ່ແມ່ນກຳລັງເປັນຫົວຫອກໃນການພັດທະນາເສດຖະກິດ-ສັງຄົມ ເພື່ອບັນລຸເປົ້າໝາຍຫັນເປັນອຸດສາຫະກຳ ແລະ ທັນສະໄໝຮອບດ້ານ. ເປົ້າໝາຍທີ່ວ່ານີ້ຮຽກຮ້ອງໃຫ້ມີການນຳໃຊ້ພະລັງງານເປັນຈຳນວນຫຼວງຫຼາຍ ອັນໄດ້ກໍ່ໃຫ້ເກີດມີບັນຫາມົນລະພິດ, ສະພາບແອອັດຂອງທີ່ພັກພາອາໄສ, ມົນລະເມືອງເພີ່ມຂຶ້ນເກີນອັດຕາທີ່ຊຸມຊົນຈະສາມາດແບກຫາບໄດ້ ແລະ ບັນຫາຈະລາຈອນຕິດຂັດ. ຍ້ອນແນວນີ້ເອງ, ທາງການຫວຽດນາມ ຈຶ່ງໃສ່ໃຈເລື່ອງການພັດທະນາຕົວເມືອງໃຫຍ່ໄປຕາມທິດສີຂຽວ ຫຼື ທີ່ເອີ້ນກັນວ່າ: ເປັນມິດກັບສິ່ງແວດລ້ອມ ໂດຍຕິດພັນກັບນະໂຍບາຍດັ່ງຕໍ່ໄປນີ້: ສົ່ງເສີມການນຳໃຊ້ພາຫະນະໂດຍສານສາທາລະນະ ໄປພ້ອມໆກັບການຈຳກັດການນຳໃຊ້ລົດສ່ວນຕົວ, ໃຊ້ຊັບພະຍາກອນທີ່ດິນຢ່າງມີປະສິດທິພາບແລະປະສິດທິຜົນ, ສ້າງສວນສາທາລະນະນິເວດໃຫ້ໄດ້ຫຼາຍ ແລະ ທົ່ວເຖິງ, ກຳນົດເຂດສີຂຽວເພື່ອນຳໃຊ້ເປັນບ່ອນໃຫ້ຄົນໄດ້ພັກຜ່ອນຊົມວິວທິວທັດ, ປູກຕົ້ນໄມ້ ຫຼື ພັນພືດຕ່າງໆຢູ່ຕາມຫຼັງຄາບັນດາຕຶກໃຫຍ່ໆ, ນຳໃຊ້ພະລັງງານປະຢັດ ແລະ ສະອາດໃນບັນດາຕຶກທີ່ພັກກໍຄືຕຶກສຳນັກງານອົງການຕ່າງໆ, ປັບປຸງການແຍກແລະກຳຈັດຂີ້ເຫຍື້ອ ໄປພ້ອມໆກັບການນຳໃຊ້ເຕັກໂນໂລຊີ ເພື່ອຣີໄຊເຄີນ ຫຼື ເພື່ອນຳເອົາຂີ້ເຫຍື້ອກັບຄືນມາໃຊ້ໃໝ່, ຫຼຸດຜ່ອນການນຳໃຊ້ຖົງຢາງປະເພດໃຊ້ໄດ້ພຽງຄັ້ງດຽວ, ເອົາໃຈໃສ່ແກ້ໄຂບັນຫາຂີ້ເຫຍື້ອຕາມນ່ານນ້ຳ ໂດຍສະເພາະແມ່ນຕາມຊາຍຫາດເຂດທ່ອງທ່ຽວ ແລະ ອື່ນໆ.

ການພັດທະນາຊົນນະບົດຕ້ອງເຮັດຄົບຊຸດ ແລະ ຮອບດ້ານ ພາຍໃຕ້ຫົວຂໍ້ນີ້ ຂໍສະເໜີບົດຮຽນທີ່ດີຈາກ ສປ ຈີນ ກ່ຽວກັບແຜນຍຸດທະສາດການພັດທະນາຊົນນະບົດຮອບດ້ານໄປຕາມ 4 ຄາດໝາຍລວມ ດັ່ງນີ້: 1. ກຳນົດຄາດໝາຍລວມ, 2. ຄວາມຮັບຜິດຊອບຕົ້ນຕໍຂອງຄະນະພັກ ແລະ ອົງການປົກຄອງທຸກຂັ້ນ, 3. ບັນຫາການຄຸ້ມຄອງ ແລະ 4. ການຊີ້ນຳ. ສຳລັບຂໍ້ທີ 1 ວ່າດ້ວຍການກຳນົດຄາດໝາຍລວມນັ້ນ ແມ່ນເນັ້ນຈຸດສຳຄັນຂອງວຽກງານໃນແຕ່ລະທ້ອງຖິ່ນ, ຊຸກຍູ້ການພັດທະນາອຸດສາຫະກຳ, ນຳໃຊ້ບຸຄະລາກອນທີ່ມີຄວາມຮູ້ຄວາມສາມາດ ແລະ ເອົາໃຈໃສ່ປະສານສົມທົບວຽກວັດທະນະທຳ ກັບສິ່ງແວດລ້ອມນິເວດ. ສ່ວນຂໍ້ທີ 2 ວ່າດ້ວຍຄວາມຮັບຜິດຊອບຂອງຄະນະພັກ ແລະ ອົງການປົກຄອງນັ້ນ ແມ່ນເນັ້ນບົດບາດການຊີ້ນຳ, ກຳແໜ້ນໜ້າທີ່ລວມ ແລະ ການປະສານງານ ເພື່ອຮັບປະກັນຄວາມເປັນເອກະພາບຂອງທຸກໆພາກສ່ວນທີ່ມີສ່ວນຮ່ວມ. ຂໍ້ທີ 3 ວ່າດ້ວຍການຄຸ້ມຄອງນັ້ນ ແມ່ນຕ້ອງເຮັດຢ່າງເຄັ່ງຄັດ ຮັດກຸມ, ຖືເອົາຄຸນນະພາບເໜືອປະລິມານ, ຖືເອົາປະສິດທິຜົນຕົວຈິງເໜືອຄວາມໄວ-ຄວາມຮີບຮ້ອນ ແບບຈູດໄລຍະ, ເດັດດ່ຽວຕ້ານພະຍາດເອົາແຕ່ຮູບການ, ເອົາແຕ່ໜ້າ ແລະ ລັດທິອາດຍາສິດ, ເອົາການເຮັດວຽກຕົວຈິງເປັນບັນທັດຖານ ເພື່ອຊຸກຍູ້ເປົ້າໝາຍການພັດທະນາ, ຮັບປະກັນການມີສ່ວນຮ່ວມຂອງຊາວກະສິກອນ ແລະ ຜົນປະໂຫຍດຂອງພວກເຂົາເຈົ້າ ສ່ວນຂໍ້ທີ 4 ສຸດທ້າຍ ກ່ຽວກັບການຊີ້ນຳນັ້ນ ໃຫ້ເນັ້ນການຊີ້ນຳ-ນຳພາ ທີ່ເປັນເອກະພາບຂອງຄະນະພັກ, ຄວາມຮັບຜິດຊອບຂອງອົງການປົກຄອງ ແລະ ການປະສານງານຂອງໜ່ວຍງານພັດທະນາຊົນນະບົດ ໂດຍມີສ່ວນຮ່ວມຈາກທົ່ວສັງຄົມ.

TE SOLE




**# ບ່າວກະບື**

ແກ່ນ: "ຄົນເຮົາຈະທັກທາຍແນວໃດ ເມື່ອເຂົາພົບຍັກສາມຫົວ?"

ຊີ: "ເຂົາກໍ່ຈະເວົ້າວ່າ: ສະບາຍດີ! ສະບາຍດີ! ສະບາຍດີ!".

**# BAOKBU**

Kaen: "What does the man say when he meets a three-headed monster?"

Sy: "He says: Hello! Hello! Hello! "

ການເມືອງ ກາຕູນ



ຜູ້ຕັດບໍ່ໄດ້ປູກ ຜູ້ປູກປູກຈົນເມື່ອຍ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ